# ບົດທີ 2
# ລັດທິ ແລະ ຄະນະຕ່າງໆ

<u>ພາກສະເໜີ:</u>

ຈຸດປະສົງຂອງບົດຮຽນ:

- ເພື່ອໃຫ້ເຂົ້າໃຈຄວາມແຕກຕ່າງລະຫວ່າງລັດທິ ກັບ ຄະນະຕ່າງໆ
- ເພື່ອເຮັດຄວາມເຂົ້າໃຈກັບຄວາມເຊື່ອນອກຮີດຂອງລັດທິໃຫຍ່ໆ
- ເພື່ອປ້ອງກັນກົນອຸບາຍ ການຫລອກລວງຕ່າງໆ
- ເພື່ອໃຫ້ກຽມພ້ອມຕອບຄຳຖາມ ແລະ ຄຳອະທິບາຍໃຫ້ພວກລັດທິສາດສະໜາອື່ນໆ

<u>ໂຄງຮ່າງບົດຮຽນ</u>

I. ພາກສະເໜີ
   A. ຄຳຕັກເຕືອນຈາກພຣະຄຳພີ
   B. ຄຳນິຍາມ

II. ພະຍານພຣະເຢໂຮວາ
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

III. ມໍມ້ອນນິສມ໌ (MORMONISM)
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

IV. ຄຣິສຕະຈັກດຽວ (UNIFICATION CHURCH)
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

V. ການເຄື່ອນໄຫວຂອງຄົນຍຸກໃໝ່ (NEW AGE MOVEMENTS)
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

VI. ວິທະຍາຄວາມຄິດ (MIND SCIENCES)
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

VII. ຄຣິສຕະຈັກ “ພຣະເຢຊູຜູ້ດຽວ” – ເປັນຄະນະໜຶ່ງ (“JESUS ONLY” CHURCH)
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

VIII. ເຊເວັນ–ເດ ແອດເວັນຕິສທ໌ – ເປັນຄະນະໜຶ່ງ (SEVENTHDAY ADVENTIST)
   A. ເບື້ອງຫລັງຄວາມເປັນມາ
   B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ

GCI

# I. ພາກສະເໜີ

## *A. ຄໍາຕັກເຕືອນຈາກພຣະຄໍາພີ*

1. **ມັດທາຍ 24:45**: ພຣະເຢຊູຊົງຕອບວ່າ, *"ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໃດຫລອກລວງພວກທ່ານໃຫ້ຫລົງ. ດ້ວຍວ່າຈະມີຫລາຍຄົນມາອ້າງນາມຂອງເຮົາວ່າ 'ເຮົານີ້ແຫລະ, ເປັນພຣະຄຣິດ' ແລະ ຈະຫລອກລວງຫລາຍຄົນໃຫ້ຫລົງໄປ.*

2. **ມັດທາຍ 24:11**: *"ໝໍທໍານວາຍຂີ້ໂລບຫລາຍຄົນຈະເກີດຂຶ້ນ ແລະຈະຫລອກລວງຫລາຍຄົນໃຫ້ຫລົງໄປ."*

3. **ມັດທາຍ 24:24**: *"ດ້ວຍວ່າຈະມີພຣະຄຣິດທຽມແລະໝໍທໍານວາຍຂີ້ໂລບຫລາຍຄົນເກີດຂຶ້ນ ສະແດງໝາຍສໍາຄັນອັນໃຫຍ່ແລະການອັດສະຈັນຕ່າງ ໆ ເພື່ອຖ້າເປັນໄດ້ ຈະຫລອກລວງຜູ້ທີ່ພຣະເຈົ້າຊົງເລືອກໄວ້ໃຫ້ຫລົງ."*

4. **1 ໂຢຮັນ 2:1819**: *"ລູກທັງຫລາຍເອີຍ, ບັດນີ້ເປັນເວລາສຸດທ້າຍແລ້ວ ແລະ ຕາມທີ່ເຈົ້າທັງຫລາຍໄດ້ຍິນໄດ້ຟັງມາແລ້ວວ່າ ຜູ້ຕໍ່ສູ້ພຣະຄຣິດຈະມີມາ ບັດນີ້ຜູ້ຕໍ່ສູ້ພຣະຄຣິດກໍເກີດມີມາຫລາຍແລ້ວ ສັນນັ້ນພວກເຮົາຈຶ່ງຮູ້ວ່າເປັນເວລາສຸດທ້າຍ. ເຂົາເຫລົ່ານັ້ນໄດ້ອອກໄປຈາກພວກເຮົາ ແຕ່ເຂົາບໍ່ແມ່ນຝ່າຍພວກເຮົາ ເພາະວ່າຖ້າເຂົາແມ່ນຝ່າຍພວກເຮົາ ເຂົາກໍຈະໄດ້ຕັ້ງຢູ່ກັບພວກເຮົາຕໍ່ໄປ (ແຕ່ເຂົາໄດ້ອອກໄປແລ້ວ) ເພື່ອປະກົດແຈ້ງວ່າເຂົາເຫລົ່ານັ້ນບໍ່ແມ່ນຝ່າຍພວກເຮົາຈັກຄົນ."*

5. **ຄາລາເຕຍ 1:69**: *"ເຮົາຮູ້ສຶກປະຫລາດໃຈທີ່ເຈາທັງຫລາຍພາກັນລະຖິ້ມພຣະອົງຢ່າງຮີບດ່ວນ ພຣະອົງຊົງເອີ້ນພວກເຈາມາດ້ວຍພຣະຄຸນຂອງພຣະຄຣິດ ແຕ່ພວກເຈາຕ່າວຄືນໄປຫາຂ່າວປະເສີດ ອັນແຕກຕ່າງເສຍ. ທີ່ຈິງ, ຂ່າວປະເສີດອັນອື່ນບໍ່ມີ ແຕ່ວ່າມີບາງຄົນໄດ້ເຮັດໃຫ້ພວກເຈາຫວຸ້ນວາຍ ແລະປາດຖະໜາທີ່ຈະປ່ຽນແປງຂ່າວປະເສີດເລື່ອງພຣະຄຣິດ. ແຕ່ເຖິງແມ່ນວ່າພວກເຮົາຫລືເທວະດາຈາກສະຫວັນກໍດີ ຈະປະກາດຂ່າວປະເສີດໃຫ້ແກ່ເຈາທັງຫລາຍ ນອກຈາກຂ່າວປະເສີດທີ່ເຮົາໄດ້ປະກາດແກ່ພວກເຈາແລ້ວນັ້ນ ກໍໃຫ້ຜູ້ນັ້ນຖືກປ້ອຍດ່າ. ເໝືອນດັ່ງພວກເຮົາໄດ້ບອກໄວ້ກ່ອນແລ້ວ ບັດນີ້ເຮົາບອກອີກວ່າ ຖ້າຜູ້ໃດປະກາດຂ່າວປະເສີດອື່ນແກ່ເຈາທັງຫລາຍ ຄື ອັນທີ່ຂັດກັບຂ່າວປະເສີດທີ່ພວກເຈາໄດ້ຮັບໄວ້ແລ້ວ ກໍໃຫ້ຜູ້ນັ້ນຖືກປ້ອຍດ່າ!"*

## *B. ຄໍານິຍາມ*

1. ສາດສະໜາຄຣິສຕຽນແມ່ນກຸ່ມຄົນທີ່ປະກາດຕົນວ່າເປັນຄຣິສຕຽນ, ຜູ້ທີ່ໄດ້ຮັບລະບົບຄໍາສອນຢ່າງເຄັ່ງຄັດຈາກຜູ້ນໍາ, ຜູ້ນໍາກຸ່ມ ຫລື ການຈັດຕັ້ງ, ຊຶ່ງເປັນຜູ້ທີ່ປະຕິເສດຄໍາສອນໃດໆກໍຕາມທີ່ສອນເລື່ອງຄວາມເຊື່ອຄຣິສຕຽນອັນແຕກຕ່າງຈາກພຣະຄໍາພີ.

2. <u>ລັດທິ</u>: ແມ່ນກຸ່ມສາດສະໜາໃດໜຶ່ງທີ່ມີລັກສະນະໂດດເດັ່ນ (ພິເສດ) ດັ່ງຕໍ່ໄປນີ້.

   a) ຜູ້ນໍາທີ່ປະກາດຕົນວ່າ ຖືກເອີ້ນຈາກພຣະເຈົ້າ ແລະ ໄດ້ຮັບສານພິເສດຊຶ່ງບໍ່ມີໃນພຣະຄໍາພີ.

   b) ຂໍ້ຄວາມຄໍາສອນ(ບົດເທດສະໜາ)ຂອງລາວມັກຈະພັນລະນາສິ່ງທີ່ລາວເອີ້ນວ່າຖ້ອຍຄໍາທີ່ມາຈາກພຣະເຈົ້າ ແລະ ໂດຍປົກກະຕິແລ້ວແມ່ນການຂຽນຂຶ້ນຕາມທໍາມະດາ. ຫລັກຄໍາສອນ ຫລື ການປະພຶດເຫລົ່ານີ້ຈະຂັດແຍ້ງກັບພຣະຄໍາພີ.

GCI

c) ການນຳຂອງລາວຈະເປັນການນຳແບບຜະເດັດການ ແລະ ມີຮູບແບບການດຳເນີນຊີວິດທີ່ຖືກຕ້ອງຕາມກົດໝາຍບ້ານເມືອງມາເປັນໂຕສະໜັບສະໜູນ.

d) ເປັນກຸ່ມທີ່ປະກາດວ່າຫົນທາງຂອງຕົນເທົ່ານັ້ນທີ່ເປັນຫົນທາງທີ່ຖືກຕ້ອ

e) ພວກເຂົາຄາດຫວັງການຍິ່ມເຫັງຈາກຄົນອື່ນໆ.

3. **ຄະນະ**: ແມ່ນກຸ່ມທີ່ແຍກຕົນເອງອອກຈາກກຸ່ມທີ່ຕົນເຄີຍຢູ່ ເພາະດ້ອຍຫລັກຄຳສອນທີ່ເຂັ້ມງວດກວ່າ, ການຖອາຍຕົວ ຫລື ວິທີທາງໃນການປະພຶດບາງຢ່າງທີ່ຕົນຄິດວ່າດີກວ່າ. ໂດຍປົກກະຕິແລ້ວ ຫລັກຄຳສອນໃຫຍ່ໆມັກມີລັກສະນະຄວາມເຊື່ອແບບອໍໂຕດ໋ອກ (ຄວາມເຊື່ອແບບດັ້ງເດີມ) ທີ່ສູນເສຍໄປ ແລ້ວ, ຖືກປ່ອຍປະລະເລີຍ ທີ່ຄິດວ່າບໍ່ໄດ້ຖືກປະຕິບັດຢ່າງເໝາະສົມ.

ຕົວຢ່າງລວມມີດັ່ງນີ້ *Quakers*, *Mennonites*, *Salvation Army*, *Plymouth Brethren* ແລະ *Pentecostals*. ທັງໝົດທີ່ກ່າວມານີ້ຖືວ່າຈັດຢູ່ໝວດທີ່ມີຄົນຮູ້ຈັກ(ເຊື່ອຖື)ຫລາຍພໍສົມຄວນ.

4. **<u>ນິກາຍ</u>**: ແມ່ນຄະນະທີ່ແຍກຕົນເອງອອກຈາກສາຂາໃດໜຶ່ງຂອງລະບົບຄຣິສຕຽນ ແລະ ເກີດມີຊື່ສຽງທາງດ້ານຄວາມໝັ້ນ ຄົງ ແລະ ຄວາມເຊື່ອຖືຕາມແບບເກົ່າໆ.

4. **<u>ການເຄື່ອນໄຫວຂອງຜູ້ທີ່ເຊື່ອຖືຫລັກເດີມຂອງສາສະໜາຄຣິສ:</u>** ຫລັກຄຳສອນຫລັກໆຂອງພວກເຂົາແມ່ນ ແບບດັ້ງເດີມ,ເຊື່ອໃນລິດອຳນາດຂອງພຣະຄຳພີ,ພຣະເຈົ້າສາມພະພາກ,ອົງພຣະເຢຊູຄຣິດ ພະຜູ້ເປັນເຈົ້າ,ແລະຫລັກຄຳສອນອື່ນໆກ່ຽວກັບປະຫວັດສາດຂອງຄຣິສະຕຽນ.ໃນທາງດ້ານວິທີການແລະໃນທາງການປະຕິບັດ,ພວກເຂົາ ແມ່ນມີຄວາມພະເດັດການແລະນຳໂດຍຜູ້ນຳທີ່ໃຊ້ອຳນາດບັງຄັບທີ່ເຂັ້ມງວດໃນຊີວິດ ສ່ວນຕົວຂອງສະມາຊິກ.

## II. ພະຍານພະເຢໂຮວາ JEHOVAH'S WITNESSES

### *A. ເບື້ອງຫລັງຄວາມເປັນມາ*

The *Watchtower Bible and Tract Society*, ແມ່ນເປັນທີ່ຮູ້ຈັກດີໃນນາມພະຍານພະເຢໂຮວາ,ຊຶ່ງໄດ້ຄົ້ນພົບໃນປີ 1880 ໂດຍ ທ່ານ*Charles Taze Russell* ຈາກອາເລເກນີ,ເພັນຊູວາເນຍ.ທ່ານ *Russell* ໄດ້ເຂົ້າຮ່ວມປະຊຸມກັບນິກາຍ ເລສບີເທີລຽນ ແລະ ຄຣິສຕະຈັກຄອນກຼີເກເຊິນ ເມື່ອຍັງເປັນເດັດ ແລະໄດ້ຄົ້ນພົບຕົວເອງວ່າຍອມຮັບຕໍ່ກັບຄຳສອນຂອງນະລົກນັ້ນບໍ່ໄດ້.ພາຍໃຕ້ອິດທິພົນຂອງເຊເວັນເດ-ແອັດແວັນຕິສທ໌, ທ່ານ Russell ໄດ້ລວບລວມຄຳສອນຂອງພວກ ເຂົາທີ່ວ່າ “ນະລົກ”ແມ່ນແທນໃຫ້ກັບຄວາມຕາຍແລະ ຊຶ່ງວ່າໃນທີ່ສຸດກໍ່ຕ້ອງຖືກທຳລາຍລ້າງ,ແຕ່ບໍ່ໄດ້ຖືກທໍລະມານຕະຫລອດໄປຢ່າງທີ່ເຂົ້າໃຈ. ອີກຄັ້ງຈາກອິດທິພົນຂອງແອັດແວັນທິສທ໌, ລາແຊວໄດ້ຮັບເອົາຄວາມຄິດທີ່ວ່າການກັບມາຄັ້ງທີ່ສອງຂອງອົງພຣະເຢຊູຄຣິດນັ້ນຈະບໍ່ປະກົດ,ແຕ່ເປັນການຊົງສະຖິດຂອງພຣະວິນຍານຫລາຍກວ່າຈະເປັນຮ່າງກາຍໃນການກັບມາໃນອະນາຄົດ. ລາແຊວກໍ່ຍັງປະຕິເສດຫລັກຄຳສອນຂອງພຣະເຈົ້າສາມພຣະພາກ ແລະພຣະເຢຊູຄຣິດຊົງເປັນພຣະຜູ້ເປັນເຈົ້າ.ທ່ານ ລາແຊວໄດ້ເສຍຊີວິດໃນປີ 1961,ແລະ ເຊື່ອວ່າສົງຄາມໂລກຄັ້ງທີ່1 ນັ້ນແມ່ນເປັນການສູ້ຮົບລະຫວ່າງທຳມະກັບອະທຳ.

GCI

*ທ່ານ ໂຢເຊັບ ລູເທີຟອດ Joseph Rutherford ທີ່ປຶກສາຢູ່ໃນສະມາຄົມ ໄດ້ເສຍຊີວິດໃນປີ* (1942),ຊຶ່ງໄດ້ສືບຕຳແໜ່ງຈາກທ່ານ ລາແຊວທີ່ເປັນຫົວໜ້າ ຂອງການເຄື່ອນໄຫວ, ແລະ ຢູ່ພາຍໃຕ້ການຄອງຕຳແໜ່ງຂອງລາວ ພວກເຂົາໄດ້ຮັບຊື່ "ພະຍານພຣະເຢໂຮວາ"ນີ້ຈາກພຣະຄຳ ເອຊາຢາ 43:12.ມາເຖິງປະຈຸບັນມີຢ່າງໜ້ອຍ 5ລ້ານກວ່າຄົນທີ່ຈິງຈັງແລະຢູ່ໃນລັດທິນີ້ຊຶ່ງມີຢູ່ທົ່ວໂລກ.ເປັນທີ່ຮູ້ຈັກກັນດີໃນຄວາມພະຍາຍາມຂອງເຂົາທີ່ເຮັດໃຫ້ປ່ຽນສາສະໜາ,ມີການອຸທິດຕົວ1ພັນລ້ານຊົ່ວໂມງຕໍ່ປີໃນການເປັນພະຍານ.ນັ້ນໝາຍຄວາມວ່າສະມະຊິກຄົນໜຶ່ງຈະໃຊ້ເວລາ ຫລາຍກວ່າ200 ຊົ່ວໂມງຕໍ່ປີ.ພະຍານພະເຢໂຮວາຍັງໄດ້ ສະໜັບສະໜຸນໃນການພິມໜັງສືອອກເປັນຈຳນວນຫລວງຫລາຍ, ຫລາຍກວ່າທຸກໆລັດທິ

*B.* *ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ*

1. ຄວາມເຊື່ອຖືໃນພຣະຄຳພີຖືກປ່ຽນແທນໂດຍການແປຄວາມໝາຍ ຂອງຜູ້ນຳຂອງພວກເຂົາໃຫ້ເປັນສິ່ງເຊື່ອຖືສຸດທ້າຍ. ພວກເຂົາໃຊ້ການແປ ຄວາມໝາຍໃນໂລກໃໝ່ຂອງພວກເຂົາເຊິ່ງໄດ້ມີຫລາຍຢ່າງປ່ຽນແປງໄປ ຈາກຄຳເວົ້າເດີມ.
**ຄຳຕອບ:** ຄວາມເຊື່ອຖືຈາກພຣະຄຳພີແມ່ນໄດ້ຖືກຍອມຮັບຈາກອົງພຣະເຢຊູຄຣິດພຣະອົງເອງ ໃນ ພຣະຄຳ ລູກາ 4:4 ແລະ 8. ຍັງມີ ຢູ່ໃນ 2ຕີໂມທຽວ 3:16 ແລະ 2ເປໂຕ 3:15-16.

2. ພຣະເຈົ້າສາມພຣະພາກຖືກປະຕິເສດວ່າບໍ່ຖືກຕາມພຣະຄຳພີ ແລະ ຜົນຂອງ ການກະທົບນັ້ນຄື ເປັນຄົນນອກສາສະໜາ.
**ຄຳຕອບ:** ໃຫ້ເບິ່ງກ່ຽວກັບພຣະເຈົ້າ ສາມພະພາກ ຢູ່ເອກະສານຂອງ ໃນ ລະດັບທີ່ 1.ຫລັກຄຳສອນພື້ນຖານ

3. ພວກເຂົາຄິດຜິດວ່າຄວາມໂຫດຮ້າຍໄດ້ກຳຈັດພະນາມຂອງພຣະເຈົ້າເຢໂຮວາຈາກພຣະຄຳພີ.ພວກໄດ້ ຟື້ນຟູພະນາມຄືນໂດຍການການແປຄວາມໝາຍໃນໂລກໃໝ່ ໃນພຣະຄຳພີຂອງພວກເຂົາ.

**ຄຳຕອບ.** ພະນາມສ່ວນໃຫຍ່ຂອງພຣະຜູ້ເປັນເຈົ້າແມ່ນ "ພຣະເຈົ້າ," ເຊິ່ງແມ່ນຄວາມໝາຍຂອງຕົ້ນສະບັບ.(ປະຖົມມະການ 1:1 ແລະ ອີກຫລາຍໆບ່ອນ.) ອີໂລຮິມ ແມ່ນຄຳນາມຈຳນວນຫລາຍທີ່ໄດ້ເປີດເຜີຍ ພຣະເຈົ້າ ສາມພຣະພາກ.ຍັງມີອີກນາມຊື່ອື່ນໆຊຶ່ງແມ່ນນາມຊື່ ທີ່ສະເພາະຂອງພຣະເຈົ້າ ເພື່ອໃຫ້ເຫັນເຖິງຄວາມຍິ່ງໃຫຍ່ແລະພະນາມ ອັນສົມຄວນ,ຊຶ່ງມີຢູ່ ສີ່ ຕົວອັກສອນ YHWH (**ອົບພະຍົບ 3:14, ເອຊາຢາ 42:8** ແລະ ບ່ອນອື່ນໆ).

ເປັນສິ່ງທີ່ຍັງບໍ່ໄດ້ເອົາອອກຈາກພຣະຄຳພີ.ເພາະຄວາມເຄົາລົບນັບຖືຕໍ່ພະນາມອັນສັກສິດຂອງພຣະເຈົ້າ ຊາວຢິວຈະບໍ່ກ່າວອອກມາ.ສະນັ້ນ,ຈຶ່ງບໍ່ໄດ້ ມີການປ່ຽນແປງໃນການແປ ຄຳວ່າ LORD ຢູ່ໃນພາສາອັງກິດ.ການກ່າວທີ່ ຖືກຕ້ອງແມ່ນຍັງບໍ່ໄດ້ເປັນທີ່ຊັດເຈນ ແລະ ດັ່ງນັ້ນ ຈຶ່ງໄດ້ອອກສຽງ ເໝືອນກັບວ່າ ຢາເວ ຫລື ພະເຢໂຮວາ. YHWH ແມ່ນມາຈາກພາສາເຮັບເຣ ໝາຍຄວາມວ່າ:ເປັນຢູ່,ຄົງຢູ່ ແລະ ກາຍເປັນ.

4. ພວກເຂົາປະຕິເສດວ່າພຣະເຢຊູຄຣິສເປັນພຣະຜູ້ເປັນເຈົ້າ,ຄຳສອນທີ່ວ່າ,ພຣະອົງແມ່ນ *Michael the Archangel* ແລະ ເປັນຜູ້ທຳອິດທີ່ໄດ້ ສ້າງຂຶ້ນ. ພຣະເຢຊູແມ່ນຕົວແທນຂອງພຣະເຢໂຮວາໃນການຊົງສ້າງທຸກສິ່ງ ຫລັງທີ່ພຣະອົງໄດ້ຖືກຊົງສ້າງໂດຍພຣະເຈົ້າພຣະເຢໂຮວາ.ເຖິງແມ່ນວ່າບໍ່ແມ່ນພຣະເຈົ້າໂດຍກຳເນີດ,ພຣະອົງເປັນຜູ້ທີ່ຍິ່ງໃຫຍ່ ແລະ ດ້ວຍເຫດນັ້ນຈຶ່ງຖືກ ເອີ້ນວ່າເປັນພຣະເຈົ້າອີກອົງໜຶ່ງ ໃນອີກຄຳເວົ້າໜຶ່ງ.ພວກເຂົາໄດ້ປ່ຽນ ພຣະຄຳພີໃນ ພຣະໂຢຮັນ 1:1 ທີ່ກ່າວໄວ້ວ່າ:
"ເມື່ອຕົ້ນເດີມນັ້ນພຣະທັມຊົງເປັນຢູ່ແລ້ວ ພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະທັມນັ້ນແຫລະຊົງເປັນພຣະເຈົ້າ.."

GCI

**ຄໍາຕອບ:** ໃນພຣະຄໍາ ໂຢຮັນ 12:39–41 ໄດ້ຢັ້ງຢືນວ່າພຣະເຢຊູ
ແມ່ນຜູ້ທີ່ເອຊາຢາໄດ້ເຫັນຢູ່ໃນພຣະວິຫານ ແລະ ເອຊາຢາ 6:5 ໄດ້ບອກວ່າ ນີ້ແມ່ນພຣະເຢໂຮວາ.

ໃນພະນິມິດ 1:17 ອົງພຣະເຢຊູຄຣິສເຈົ້າໄດ້ເປີດເຜີຍພຣະອົງໃນຖານະ "ຜູ້ຕົ້ນແລະ ຜູ້ປາຍ"
ຊຶ່ງແມ່ນອົງດຽວກັນກັບພຣະເຢໂຮວາ ຢູ່ໃນ ເອຊາຢາ 44: 6 (ໃຫ້ເບິ່ງຕື່ມ ໃນ 1ເປໂຕ 2:8 ກັບ ເອຊາຢາ 8:13–14; ພະນິມິດ 2:23 ກັບ ເຢເລມີຢາ 17:8–10).

5. ພວກເຂົາປະຕິເສດການຄືນພຣະຊົນຂອງອົງພຣະເຢຊູຄຣິສ,ໂດຍເວົ້າວ່າ
ພຣະອົງໄດ້ຟື້ນຄືນມາໂດຍເປັນວິນຍານຊຶ່ງບໍ່ມີຕົວຕົນ ແລະ ກາຍເປັນເທວະດາ.

**ຄໍາຕອບ: ລູກາ 24:39–43; ໂຢຮັນ 20:17, 27**

6. ພຣະວິນຍານບໍລິສຸດບໍ່ໄດ້ເປັນບຸກຄົນຫລື ສ່ວນໜຶ່ງຂອງພຣະເຈົ້າ,
ແຕ່ວ່າແມ່ນອໍານາດຂອງພຣະເຢໂຮວາ,ຊຶ່ງໄດ້ເກີດມາຈາກພຣະອົງເພື່ອໃຫ້ບັນລຸຄວາມສໍາເລັດ.

**ຄໍາຕອບ**: ກິດຈະການ **5:34**

7. ພວກເຂົາບໍ່ເຊື່ອວ່າມະນຸດມີວິນຍານຊຶ່ງເຮັດໃຫ້ຮ່າງກາຍມີຊີວິດຢູ່.
ພວກເຂົາສອນວ່າພວກເຮົາສິ້ນສຸດການມີຊີວິດດ້ວຍຄວາມຕາຍແຕ່ວ່າໂດຍການຄືນພຣະຊົນຂອງພຣະເຢໂຮວາຈະສ້າງພວກເຂົາໃຫ້ຈາກຄວາມຊົງຈໍາ ຂອງພວກເຂົາ.

ຄໍາຕອບ: **2 ໂກລິນໂທ 5:34**

8. ພວກເຂົາສອນວ່າມີຄຣິສະຕຽນມີຊົນຊັ້ນທີ່ແຕກຕ່າງກັນຕາມໂຊກຊະຕາກໍາທີ່ແຕກຕ່າງກັນ. 144,000 **of ພະນິມິດ7ແລະ 14** ແມ່ນຜູ້
ຊຶ່ງຢູ່ກັບອົງພຣະເຢຊູທີ່ໄດ້ເກີດໃໝ່ເພື່ອຈະມີຊີວິດຢູ່ໂດຍພຣະວິນຍານ.ພວກເຂົາຈະຄອບຄອບສະຫວັນກັບພຣະຄຣິດ.ທີ່ເຫລືອຈະກັບມີຊີວິດຢູ່ໃນສວັນຂອງໂລກນີ້ກັບຮ່າງກາຍທີ່ເປັນຄືນມາ.,

ຄໍາຕອບ:ບໍ່ຖືກຕ້ອງຕາມພຣະຄໍາພີ.

9. ພວກເຂົາສອນວ່າບໍ່ມີນະລົກຕາມຄວາມເຂົ້າໃຈທີ່ມີມາ.

ສິ່ງເຫລົ່ານັ້ນຈະແມ່ນການຖືກທໍາລາຍລ້າງ;ພວກເຂົາຈະບໍ່ຖືກທໍລະມານ ຫລື ທົນທຸກຊົ່ວນິລັນ.

**ຄໍາຕອບ: 2 ເທຊະໂລນີກ 1:89**

10. ການຕາຍຂອງພຣະເຢຊູຄຣິດແມ່ນເປັນຄ່າໄຖ່ເພື່ອຊົດໃຊ້ຕໍ່ກັບຄວາມຜິດ
ທີ່ມາຈາກອາດາມ.ພຣະອົງເປັນຄືນມາໂດຍວິນຍານຊຶ່ງບໍ່ປະກົດໃຫ້ເຫັນໄດ້,
ສູນເສຍຮ່າງກາຍຊຶ່ງເປັນຮ່າງກາຍຂອງໂລກນີ້.

**ຄໍາຕອບ: ໂຢຮັນ 20:17, 27, ກິດຈະການ 1:9 11**

11. ຄວາມລອດພົ້ນແມ່ນໄດ້ຮັບດ້ວຍຄວາມເຊື່ອໃນອົງພຣະເຢຊູຄຣິດບວກ ກັບວຽກງານ, ເຊັ່ນວ່າ
ຮັບຄວາມຮູ້ເລື່ອງພຣະວິນຍານຈາກ ການສອນຂອງພວກເຂົາ ແລະ
ເຮັດວຽກງານກ່ຽວກັບລາຊະອານະຈັກ ຂອງພຣະເຈົ້າ ເຊັ່ນ

GCI

ປະຕູສູ່ປະຕູໂດຍຄໍາພະຍານ,ຮັບບັບຕິສະມາຈາກ ພວກເຂົາ ແລະ ດໍາເນີນຊີວິດຕາມຄໍາສອນຂອງພວກເຂົາ.

**ຄໍາຕອບ**: **ຕີໂຕ 3:5**

12. ກ່ຽວກັບການຄືນມາອີກຄັ້ງທີ່ສອງພວກເຂົາໄດ້ປະຕິເສດວ່າ ພຣະຄຣິສຈະຄືນມາໂດຍຮ່າງກາຍໃນໂລກນີ້.ແທ້ໆແລ້ວ,ການປະກົດ ຂອງພຣະອົງນັ້ນຈະບໍ່ສາມາດເຫັນໄດ້, ຊຶ່ງ ເລີ່ມແຕ່ ປີ 1914, ແມ່ນເຫດການວິສະກໍາໄດ້ ນໍາໄປສູ່ການສູ້ຮົບຂອງຝ່າຍອະທໍາແລະ ທໍາມະ ແລະ ເປັນການເລີ່ມຕົ້ນຂອງໜຶ່ງຮອບໜຶ່ງພັນປີ. *Watchtower Society* ແມ່ນເປັນທີ່ຮູ້ຈັກສໍາຫລັບການຈັດວັນທີ່ມີຄວາມແຕກຕ່າງກັນສໍາຫລັບເມື່ອສົງຄາມອາດເກີດຂຶ້ນ;ຫລັງຈາກຄວາມຜິດຜາດຂອງຜູ້ທໍານວຍ, ເຮັດໃຫ້ສະມາຊິກສ່ວນຫລາຍຕື່ນຕົວແລະປະການເຄື່ອນໄຫວ.

**ຄໍາຕອບ**: ກິດຈະການ **1:1011**

13. ພວກເຂົາປະກາດວ່າທຸກສາສະໜາແລະການສອນຂອງບັນດາ ອາຈານທຸກຄົນ ຍົກເວັ້ນພວກເຂົາແມ່ນພວກຫລອກລວງ ແລະ ສອນປອມ..

**ຄໍາຕອບ**: ໃຫ້ເບິ່ງທີ່ນິຍາມຂອງລັດທິ.

14. ພວກເຂົາຫ້າມການແຕ່ງງານ ແລະ ການມີລູກເພາະວ່າເວລາໃກ້ໝົດແລ້ວ.

**ຄໍາຕອບ**:ປະຖົມມະການ **1:28**

15. ພວກເຂົາບໍ່ນັບຖືການນໍາຂອງທຸກໆປະເທດ, ແລະ ພວກເຂົາປະຕິເສດການສະແດງຄວາມເຄົາລົບຕໍ່ທຸງຊາດ ຫລື ມີສ່ວນໃນສົງຄາມ.

ຄໍາຕອບ: **ໂລມ 13:17**

16. ພວກເຂົາບໍ່ສະຫລອງວັນເກີດ,ຄຣິສະມາດ,ວັນຄືນພຣະຊົນ ຫລື ທຸກໆວັນພັກ,ປະຕິເສດເພາະນອກສາສະໜາ.

**ຄໍາຕອບ: ລູກາ 2920; ມັດທາຍ 2:12, 912; ໂລມ 14:56**

17. ພວກເຂົາປະຕິເສດການໃຫ້ເລືອດ,ອີງໃສ່ຄວາມເຂົ້າໃຈຜິດໃນ ພຣະຄໍາ ລະບຽບເລວີ 17

ຄໍາຕອບ: ເອເຟໂຊ 5:12. ພຣະຄໍາພີບໍ່ໄດ້ສອນວ່າບໍ່ໃຫ້ບໍລິຈາກເລືອດ. ຄວາມຈິງພວກເຮົາຖືກສອນໃຫ້ສະແດງຄວາມຮັກໂດຍການເສຍສະຫລະຊີວິດຂອງພວກເຮົາໃຫ້ກັບຄົນອື່ນ(ເຊິ່ງລວມໄປເຖິງເລືອດ).

## III. ມມອນນສມ (MORMONISM)

### *A. ເບື້ອງຫລັງຄວາມເປັນມາ.*

GCI

*ຄຣິສຕະຈັກຂອງພຣະເຢຊູຄຣິສຂອງ Latterday Saints*, ເປັນທີ່ຮູ້ຈັກໃນນາມ ຄຣິສຕະຈັກມໍມ້ອນນິສມ໌ ຊຶ່ງຄົ້ນພົບໂດຍ ທ່ານ ໂຢເຊັບ ສະມິດ, Jr.ທີ່ຢູ່ລັດນິວຢ໌ອກ ໃນສະຫະລັດອາເມລິກາ. ທ່ານສະມິດໄດ້ອ້າງວ່າ ພຣະເຈົ້າພຣະບິດາ ແລະ ພຣະເຢຊູຄຣິດ ໄດ້ ປະກົດໃຫ້ຕົນເຫັນໃນປີ 1820,ໄດ້ບອກໃຫ້ລາວຮູ້ວ່າທຸກ ຄຣິສຕະຈັກແມ່ນຜິດ ແລະ ຄວາມເຊື່ອຖືຂອງເຂົາເປັນສິ່ງທີ່ໜ້າລັງກຽດ.

ໃນປີ 1823 ເທວະດາ ຊື່ ໂມໂລນີ ໄດ້ປະກົດກັບລາວ ໄດ້ບອກລາວແຜ່ນຈາລຶກ ທອງຄຳວ່າໄດ້ຝັງໄວ້ຢູ່ໃກ້ກັບແຄມພູ.ແຜ່ນຈາລຶກເຫລົ່ານີ້ໄດ້ຖືກກ່າວຫາວ່າໄດ້ບັນທຶກຄົນທີ່ໄດ້ອົບພະຍົບຈາກແຖບ ໃກ້ຕະເວັນອອກໄປອາເມລິກາ. ໃນປີ 1827 ທ່ານສະມິດໄດ້ອ້າງວ່າ ໂມໂລນີ ໄດ້ນຳລາວໄປສູ່ໃຕ້ໂລກແລະ ເລີ່ມຕົ້ນໃນການຊ່ວຍຊ່ວຍທີ່ເໜືອທຳມະຊາດ, ໃນ ການ ແປ ອັກສອນລຶກ ລັບຂອງຊາວເອຢີບກ່ຽວກັບການປະຕິຮູບ. ໃນເດືອນ ມິຖຸນາ 1830,ທ່ານສະມິດໄດ້ຈັດພິມ ຜົນ ຂອງ "ໜັງສື ມໍມອນນິສມ໌" *ແລະ ສ້າງຄຣິສຕະຈັກຂອງລາວໃນໜຶ່ງເດືອນຕໍ່ມາ.*

ຫລັງຈາກໂຢເຊັບ ສະມິດ*Joseph Smith* ໄດ້ເສຍຊີວິດ ໃນມືຂອງຜູ້ກໍ່ກວນ (l844), ທ່ານ ໄບລແຮມ ຢູງ*Brigham Young* (1801 77) ໄດ້ສອບຕຳແໜ່ງຜູ້ນຳຂອງກຸ່ມ , ແລະ ໄດ້ຍົກຍ້າຍໄປສູ່ ອຸດທາ. ຜູ້ທຳນວຍມໍມ້ອນນິສມ໌ໃນປະຈຸບັນແມ່ນ ກາດອນ ບີ.ຮິນເຄຣ *Gordon B. Hinckley*. ໃນປະຈຸບັນ ໂບດມໍມ້ອນນິສມ໌ສາມາດອວດ ໄດ້ວ່າມີສະມາຊິກທົ່ວໂລກ ປະມານ 10 ລ້ານ. ມໍມ້ອນນິສມ໌ມີຄວາມກະຕືລືລົ້ນ ໃນການອອກໄປປະກາດ ແລະ ຈັດພິມໜັງສື.

ດ້ານຄວາມຈະເລີນຮຸ່ງເຮືອງພວກເຂົາເປັນທີ່ສອງຮອງລົງມາຈາວໂບດແຄເທີລິກ. ມໍມ້ອນນິສມ໌ຍັງຮູ້ຈັກກັນດີສຳຫລັບຈະຈຸດເໜັ້ນຂອງພວກເຂົາເລື່ອງ "ຄຸນຄ່າຂອງຄອບຄົວ" ແລະ ຮູບແບບການດຳເນີນຊີວິດທີ່ລຽບງ່າຍ.ເປັນ ສາສະໜາທີ່ມີການຈະເລີນເຕີບໂຕໄວທີ່ສຸດໃນໂລກ.

*B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ.*

1. ກ່ຽວກັ<u>ບພຣະເຈົ້າ,</u> *ມໍມ້ອນເຊື່ອໃນຄວາມກ້າວໜ້າຂອງພຣະເຈົ້າຫລາຍ ອົງທີ່ກໍ່ໃຫ້ເກີດພຣະເຈົ້າອົງອື່ນໆ. "ພຣະເຈົ້າພຣະບິດາ"ແມ່ນພຣະເຈົ້າອົງໜຶ່ງ, ແລະ ພຣະອົງແມ່ນພຣະເຈົ້າທີ່ຢູ່ເໜືອໂລກນີ້ແລະ ພຣະເຈົ້າອົງທີ່ພວກເຮົາໄດ້ຄົ້ນ ຫາ ນັ້ນ. ສະນັ້ນນິກາຍມໍມ້ອນແມ່ນເຊື່ອໃນພຣະເຈົ້າຫລາຍອົງຄະນະທີ່ຄຣິສະຕຽນແມ່ນເຂັ້ມງວດກ່ຽວການມີພຣະເຈົ້າດຽວ . ພວກເຂົາຍັງເຊື່ອວ່າພຣະເຈົ້າພຣະບິດາແມ່ນ ຜູ້ທີ່ໄດ້ບັນລຸການຍົກຍ້ອງໃນການເປັນພຣະເຈົ້າໂດຍການເຊື່ອຟັງຫລັກຂ່າວປະເສີດອັນດຽວກັນຊຶ່ງມໍມ້ອນນິສມ໌ໄດ້ປະຕິບັດນັ້ນ. ພຣະເຈົ້າພຣະບິດາມີຮ່າງກາຍແລະ ກະດູກທີ່ພວກເຮົາສາມາດຈັບຕ້ອງໄດ້.*

2. *ມໍມ້ອນນິສມ໌ປະຕິເສດຫລັກຄຳສອນຂອງພຣະຄຳພີກ່ຽວກັບພຣະເຈົ້າສາມພຣະພາກ, ພວກເຂົາສອນວ່າພຣະເຈົ້າພຣະບິດາ,ພຣະບຸດ ແລະ ພຣະວິນຍານບໍລິສຸດແມ່ນພຣະເຈົ້າສາມອົງທີ່ຢູ່ແຍກກັນ.*

3. ກ່ຽວກັບມ**<u>ະນຸດ,</u>** ມໍມ້ອນນິສມ໌ສອນວ່າແມ່ນພຣະເຈົ້າ " ໝໍ່ລູກ" ແລະ ອາດຈະບັນລຸຄວາມເປັນເທບເໝືອນກັບພຣະບິດາໃນສະຫວັນ.ພຣະເຈົ້າແລະມະນຸດແມ່ນສາຍພັນດຽວກັນ, ຊຶ່ງພຣະເຈົ້າແມ່ນຖືກຍົກໃຫ້ສູງແລະຍົກຍ່ອງວ່າປະເສີດ ກວ່າມະນຸດ.ກ່ອນການເກີດຂອງພວກເຂົາລົງມາສູ່ໂລກ,ມະນຸດທຸກຄົນເປັນຢູ່ກ່ອນແລ້ວໃນສະຫວັນລູກຫລານຝ່າຍວິນຍານຂອງພຣະບິດາແລະພຣະມານດາແລະ ເທບທິດາ. ພວກເຂົາບໍ່ໄດ້ມີຄວາມຊົງຈຳໃນການເປັນຢູ່ຂອງເຂົາໃນເມື່ອກ່ອນໃນ ຣຊະອານາຈັກແຫ່ງວິນຍານ.

ຊີວິດການເປັນຢູ່ໃນເມື່ອກ່ອນແມ່ນເວລາແຫ່ງການທົດສອບ. ຜູ້ທີ່ບໍ່ມີຄວາມ ເຊື່ອທີ່ດີ ຫລື ຄວາມກ້າຫານໃນເວລາແຫ່ງການພິສູດແມ່ນຈະລົງມາ ເກີດ ເປັນຄົນຜິວດຳໃນໂລກນີ້.ຖ້າຫາກເຊື່ອຟັງຕໍ່ຄຳສອນຂອງມໍມ້ອນນິສມ໌ ແລະ ປະຕິບັດ,

ພວກເຂົາຈະໄດ້ຮັບການຍົກຍ້ອງ.ຄົນທີ່ຖືກຍົກຍ້ອງຈະໄດ້ອາໃສ
ຢູ່ໃນອີກໂລກແລະໃຫ້ກຳເນີດລູກຫລານຝ່າຍວິນຍານ,ສືບຕໍ່ໄປຕາມວົງວຽນເດີມ.

4. ກ່ຽວກັບອົງພຣະເຢຊູຄຣິສ,ມໍມ້ອນນິສມ໌ສອນວ່າ ພຣະອົງເປັນອ້າຍຝ່າຍ ວິນຍານຂອງລູຊິເຟີ ເພາະວ່າພວກເຂົາກຳເນີດມາຈາກພໍ່ແມ່ດຽວກັນໃນ ຊີວິດກ່ອນ ກ່ອນທີ່ຈະມາເກີດ.ພວກເຂົາປະຕິເສດການເກີດຈາກຍິງພົມມະຈາລີ,ແລະ ສອນວ່າຮ່າງກາຍຂອງອົງພຣະເຢຊູຄຣິດແມ່ນຜົນຂອງການຮ່ວມສຳພັນກັນລະຫວ່າງພຣະເຈົ້າພຣະບິດາແລະນາງມາລີ. ຄວາມເປັນພຣະເຈົ້າຂອງພຣະອົງ ນັ້ນບໍ່ໄດ້ພິເສດເພາະວ່າກໍ່ເໝືອນກັບມະນຸດຄົນອື່ນໆທີ່ໄດ້ຮັບການບັນລຸ. ສະນັ້ນ ການເກີດຂອງພຣະເຢຊູຄຣິດນັ້ນບໍ່ໄດ້ພິເສດໄປກວ່າພຣະອື່ນໆ, ຫລັງຈາກ ທີ່ເປັນຢູ່ໃນວິນຍານມາກ່ອນ,ໄດ້ມາໃນໂລກນີ້ ເພື່ອຮັບເອົາຮ່າງກາຍກ່ອນຈະ ກາຍເປັນພຣະເຈົ້າ.

5. ກ່ຽວກັບຄວາມລອດພົ້ນ,ມໍມ້ອນນິສມ໌ປະຕິເສດຫລັກຄຳສອນທີ່ວ່າຄວາມລອດພົ້ນໄດ້ມາຍ້ອນພຣະຄຸນ,ແຕ່ໄດ້ສອນວ່າ ພວກເຮົາສາມາດລອດພົ້ນໄດ້ດ້ວຍ “ການກັບໃຈ, ການຮັບບັບຕິສະມາ, ຄວາມເຊື່ອ, ແລະ ການເຮັດດີ.”ການຕາຍຂອງພຣະເຢຊູໄດ້ ເຮັດໃຫ້ມະນຸດຟື້ນຂຶ້ນມາໃໝ່ ແຕ່ ບໍ່ໄດ້ຊ່ວຍມະນຸດເລື່ອງຄວາມບາບ. ໃນຂະນະທີ່ກິດຈະການທີ່ພຣະເຢຊູໄດ້ເຮັດແມ່ນເປັນການເລີ່ມຕົ້ນແຕ່ກິດຈະການຂອງມະນຸດແມ່ນເຮັດໃຫ້ຂັ້ນຕອນນັ້ນສຳເລັດຜົນ. ຂຶ້ນກັບກິດຈະການທີ່ໄດ້ເຮັດນັ້ນ ມະນຸດຈະໄດ້ຮັບໜຶ່ງໃນສາມຂັ້ນໃນສະຫວັນ:ໃນທາງພຣະເຈົ້າ,ໃນທາງໂລກ ແລະ ທີ່ມາຈາກສະຫ້ວນ.ການແຕ່ງງານແມ່ນສິ່ງໜຶ່ງເພື່ອບັນລຸຮາຊະອານາຈັກທີ່ມາຈາກສວັນ, ລະດັບທີ່ສູງສຸດ.

6. ຕໍ່ກັບຄຳແປພຣະຄຳພີ ໃນສະບັບ King James, ມໍມ້ອນນິສມ໌ໄດ້ໃຊ້ໄວ້ເປັນ ທີ່ເຄົາລົບທີ່ເປັນຄວາມເຊື່ອຖືຫລັກ.ໜັງສືຂອງມໍມ້ອນນິສມ໌,ຫລັກຄຳສອນແລະຂໍ້ສັນຍາຕ່າງໆ,the Peart of Great Price. ແລະຍັງເຊື່ອວ່າຜູ້ນຳຄຣິສຕະຈັກແມ່ນຜູ້ ທີ່ໄດ້ຮັບການເປີຍວ່າເປັນຜູ້ທີ່ຈະນຳຄຣິສຕະຈັກ.

ຄຳຕອບ: ມີການເພີ່ມພຣະຄຳພີດ້ວຍໜັງສືທີ່ເພີ່ມຂຶ້ນມາຂອງພວກເຂົາ ເອງ,ມໍມ້ອນນິສມ໌ໄດ້ເອົາພວກເຂົາອອກຈາກປະຫວັດສາດຂອງຄຣິສະຕຽນ, ຊຶ່ງຮັບຮອງພຣະຄຳພີວ່າເປັນແຫລ່ງສຸດທ້າຍຂອງລິດອຳນາດ.

7. *ມໍມ້ອນນິສມ໌ໄດ້ອ້າງວ່າເປັນຄຣິສຕະຈັກດຽວທີ່ຖືກຕ້ອງໃນການເປີດເຜີຍຂອງພຣະເຈົ້າ.ພວກເຂົາໄດ້ຮັກສາຄຣິສຕະຈັກຂອງຄຣິສະຕຽນທັງໝົດທີ່ໄດ້ຖິ້ມສາສະໜາ ຈົນເຖິງປີ 1830, ຊຶ່ງໃນເວລານີການຟື້ນຟູພາຍໃຕ້ການນຳຂອງທ່ານ ໂຢເຊັບ ສະມິດ.*

8. *ໂຢເຊັບສະມິດ ຜູ້ທີ່ໄດ້ກໍ່ຕັ້ງ ຄຣິຕະສາໜານິກາຍມໍມ້ອນນິສມ໌ ໄດ້ເວົ້າວ່າລາວໄດ້ຮັບການດົນໃຈຈາກພຣະເຈົ້າເພື່ອໃຫ້ເປັນຜູ້ທຳນວຍທີ່ບໍ່ມີ ຄວາມຜິດພາດກ່ອນທີ່ລາວຈະເກີດມາ.*

9. *ມໍມ້ອນເຊື່ອວ່າການຕົກໃນບາບຂອງມະນຸດໄດ້ແມ່ນການຕົກຕໍ່າທີ່ເພີ່ມຂຶ້ນເລື້ອຍໆ.ຖ້າຫາອາດາມບໍ່ກິນໝາກໄມ້ທີ່ຕ້ອງຫ້າມ,ລາວກໍ່ຈະບໍ່ມີລູກ ເພາະວ່າລາວກິນໝາກໄມ້ທີ່ຖືກຫ້າມຈຶ່ງເຮັດໃຫ້ມະນຸດສາມາດມີການແຜ່ເຊື້ອຊາດ.*

10. *ມໍມ້ອນປະຕິບັດການຮັບບັບຕິສະມາສຳຫລັບຜູ້ທີ່ຕາຍແລ້ວ.ມໍມ້ອນຜູ້ທີ່ມີຊີວິດສາມາດຮັບບັບຕິສະມາໃຫ້ກັບຜູ້ອື່ນທີ່ຕາຍແລ້ວແຕ່ຍັງບໍ່ໄດ້ຮັບບັບຕິສະມາ. ພວກເຂົາຍັງເຊື່ອໃນການຮັບສິນລະນຶກກັບຜູ້ທີ່ຕາຍແລ້ວໂດຍສ່ວນຕົວ ແລະ ພາຍໃຕ້ການດູແລຂອງນັກບວດ.*

11. *ມໍມ້ອນນິສມ໌ຍັງຍຶດການແຕ່ງງານໄດ້ຫລາຍເທື່ອ,ພວກເຂົາສອນເຖິງການແຕ່ງງານທີ່ມາຈາກສວັນ.ສິ່ງເຫລົ່ານີ້ບໍ່ໄດ້ເຮັດເພື່ອຊີວິດຂອງລາວເທົ່ານັ້ນແຕ່ສຳຫລັບສວັນດ້ວຍ.ມໍມ້ອນນິສມ໌ຫລາຍຄົນເຊື່ອວ່າພຣະເຢຊູຄຣິດໄດ້ແຕ່ງງານກັບມາລີແລະມາທາ.*

12. *ມໍມ້ອນນິສມ໌ເຊື່ອໃນຄວາມຈິງກ່ຽວກັບຊ່ວງເວລາທີ່ພຣະເຢຊູຈະສະເດັດມາໂຜດໂລກ ຊຶ່ງພຣະເຢຊູຈະຄອບຄອງຢູ່ເໜືອສອງເມືອງ: ເຢລູຊາເລັມ ແລະ ມິດຊູລີ.*

## IV. ຄຣສຕະຈກດຽວ (UNIFICATION CHURCH)

GCI

*A. ເບື້ອງຫລັງຄວາມເປັນມາ*

ຜູ້ຄົ້ນພົບແລະ ຜູ້ນຳຂອງຄົນປະຈຸບັນຂອງຄຣິສຕະຈັດດຽວແມ່ນ ທ່ານ ຊຸນ ມຽວ ມູນ. ມູນໄດ້ບອກວ່າເມື່ອປີ1936,ເມື່ອລາວໄດ້ອາຍຸ16ປີ,ພຣະເຢຊູໄດ້ປະກົດຕໍ່ລາວ ແລະ ບອກວ່າມູນຈະເຮັດໃຫ້ພັນທະກິດທີ່ພຣະເຢຊູເລີ່ມຕົ້ນນັ້ນສຳເລັດ.ໃນປີ 1 946, ທ່ານ ມູນໄດ້ຖືກຈັບໂດຍຕຳຫລວດຊາວເກົາຫລີເໜືອ ແລະ ລາວໄດ້ບອກວ່າລາວໄດ້ຖືກທໍລະມານເພາະຄວາມເຊື່ອຂອງລາວ. ໄດ້ຮັບການປ່ອຍ ແລະ ກໍ່ຖືກເຂົ້າຄຸກອີກຄັ້ງ,ລາວໄດ້ໜີອອກຈາກຄຸກໄດ້ ແລະ ລາວໄດ້ໜີໄປທາງໃຕ້ໃນເວລາທີ່ມີສົງຄາມເກົາຫລີ.ລາວໄດ້ກໍ່ຕັ້ງຄຣິສຕະຈັກຂອງລາວໃນເກົາຫລີໃຕ້ໃນປີ 1954,ຊຶ່ງລາວໄດ້ໃສ່ຊື່ວ່າ ສະມາຄົມພຣະວິນຍານພຣະບໍຣິສຸດ ຄຣິສະຕຽນໂລກດຽວ (ຫລື ທີ່ຮູ້ຈັກກັນດີແມ່ນຄຣິສຕະຈັກດຽວ).ໃນປີ 1957,ມູນໄດ້ປະກາດຫລັກການຂອງພຣະເຈົ້າ, ຊຶ່ງແມ່ນກິດຈະການຫລັກໆທີ່ຕັ້ງຂຶ້ນ ຂອງສາສະໜາສາດດຽວ.

ໃນປີ1959 ກຸ່ມໄດ້ແຍກຕົວກັນໄປປະເທດອາເມລິກາ.ມູນໄດ້ນຳໃຫ້ເຫັນການຕິດ ຕາມທີ່ຍິ່ງໃຫຍ່ຢູ່ໃນອາເມລິກາໃນປີ1970,ທີ່ເຊິ່ງການເຄື່ອນໄຫວຂອງລາວໄດ້ດຶງ ດູດຄວາມສົນໃນຂອງສື່ຢ່າງມາກມາຍ,ສ່ວນໃຫຍ່ແມ່ນໃນທາງທີ່ລົບ.ຄວາມສັບສົນໃນຄວາມຂັດແຍ່ງທີ່ໄດ້ຖືກກ່າວຫາເມື່ອຖືກເປີດໂປງ ແລະ ກົນອຸບາຍໃນການຫາທຶນ ແລະ ກ່ຽວກັບການໃຊ້ອຳນາດຜະເດັດການໃນຮູບແບບຂອງມູນ.ໃນປີ 1982 ມູນ ໄດ້ເລີ່ມຮັບໃຊ້ເປັນເວລາ18 ເດືອນຢູ່ໃນຄຸກກ່ຽວກັບສົມນິບານ ທີ່ໃໝກ່ຽວກັບການໜີພາສີ.

ຄຣິສຕະຈັກດຽວແມ່ນມີສະມະຊິກ ໜຶ່ງ ຫາ ສອງ ລ້ານ,ຊຶ່ງປະມານ ໜຶ່ງມື່ນຫາ ສາມໝື່ນຄົນແມ່ນອາໃສຢູ່ໃນສະຫະລັດອາເມລິກາ.ເຊິ່ງມີຄວາມຕັ້ງໃຈທີ່ຍິ່ງໃຫຍ່ ຂອງ "*Moonies*," ດັ່ງທີ່ໄດ້ເອີ້ນວ່າເປັນຄົນນອກວົງການຢູ່ໃນເກົາຫລີ ແລະ ຍີ່ປຸ່ນ. ຄຣິສຕະຈັກໄດ້ອົບຮົມດ້ານສາສະໜາສາດກ່ຽວກັບຄຣິສຕະຈັກດຽວຢູ່ໃນນິວຢັອກ ແລະ ມີທຸລະກິດທີ່ເປັນທີ່ນັບຖື ລວມໄປເຖິງໜັງສືພິມທີ່ເປັນທີ່ຮູ້ຈັກເຊັ່ນ *Washington Times*.

*B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ.*

1. ກ່ຽວກັບການເປີດເຜີຍຂອງພຣະເຈົ້າ,ຄຣິສຕະຈັກດຽວສອນວ່າ ພຣະເຈົ້າໄດ້ເປີດເຜີຍຄວາມຈິງຕໍ່ມູນ,ຄວາມຊ່ອຍເຫລືອຂອງພຣະເຈົ້າທີ່ມາຈາກພຣະວິນຍານບໍລິສຸດສຳຫລັບຍຸກປະຈຸບັນນີ້.ຄວາມຈິງຂອງມູນແມ່ນໄດ້ຄົ້ນພົບຢູ່ໃນຫລັກການຂອງພຣະເຈົ້າ,ຊຶ່ງຖືວ່າເປັນພຣະຄຳພີສະບັບທີ່ສາມ ມັນຖືກດຶງຄວາມສົນໃຈຫລາຍກວ່າພຣະຄຳພີອີກ.

3. ກ່ຽວກັບຄວາມບາບ, ມູນສອນວ່າແຜນການເລີ່ມຕົ້ນຂອງ ພຣະເຈົ້າແມ່ນເຮັດໃຫ້ອາດາມແລະເອວາໃຫຍ່ຂຶ້ນດ້ານຈິດວິນຍານ ແລະ ຫລັງຈາກນັ້ນ ເພື່ອເຮັດໃຫ້ມະນຸດຊາດບໍ່ມີບາບ.ແຕ່ຊາຕານໄດ້ທຳລາຍ ແຜນການນີ້ໂດຍການຫລອກໃຫ້ເອວາເຮັດຜິດຕໍ່ກັບພຣະອົງ;ສິ່ງເຫລົ່ານີ້ໄດ້ນຳໄປການພັງທະລາຍດ້ານຈິດວິນຍານຂອງມະນຸດ.ຫລັງຈາກນັ້ນເມື່ອອາດາມມີຄວາມສຳພັນກັບເອວາ(ກ່ອນເຖິງຄວາມສຳເລັດດ້ານຝ່າຍຈິດວິນຍານ),ອັນນີ້ເຮັດໃຫ້ຝ່າຍເນື້ອໜັງຂອງມະນຸດຖືກທຳລາຍ.

3. ຄວາມລອດຮຽກຮ້ອງການໄຖ່ທັງທາງດ້ານຝ່າຍຈິດວິນຍານແລະຮ່າງກາຍ . ພຣະເຢຊູມາໃນໂລກເພື່ອເຮັດໃຫ້ສອງຢ່າງນີ້ສຳເລັດ:ພຣະອົງໄດ້ມາແຕ່ງງານ ແລະ ເພື່ອເຮັດໃຫ້ມະນຸດຊາດບໍ່ມີບາບ ຊຶ່ງຕ້ອງໄດ້ຮັບການໄຖ່ທັງ

GCI

ຝ່າຍເນື້ອໜັງແລະຈິດວິນຍານ.ເພາະວ່າຊາວຢິວໄດ້ປະຕິເສດພຣະເຢຊູ,ຈຶ່ງເຮັດໃຫ້ພຣະອົງບໍ່ສາມາດສຳເ ຣັດຜົນໃນແຜນການຢາກໃຫ້ມະນຸດໄດ້ລອດຈຶ່ງໄດ້ສິ້ນພະຊົນທີ່ໄມ້ກາງແຂນ.

ສະນັ້ນຈຶ່ງຢືນຢັນໂດຍການກັບມາຄັ້ງທີ່ສອງ, "*Lord of the Second Advent*," ເພື່ອຕຽມຄວາມລອດຝ່າຍເນື້ອໜັງ.ສະມາຊິກຂອງຄຣິສຕະຈັກ ດຽວສ່ວນໃຫຍ່ແມ່ນເຫັນວ່າມູນແມ່ນການກັບມາຂອງພຣະຜູ້ເປັນເຈົ້າໃນຄັ້ງທີ່ສອງ.ວຽກງານຂອງມູນແ ມ່ນເພື່ອສ້າງຄອບຄົວທີ່ສົມບູນ.ລູກທັງ 12ຄົນຈະ ບໍ່ມີບາບ. ລາວຈະຕ້ອງຂະຫຍາຍຜູ້ຕິດຕາມຂອງລາວໂດຍຜ່ານການເຊື່ອ ຟັງຂອງພວກເຂົາ, ເຊັ່ນການຈັດການແຕ່ງງານໃຫ້ພວກເຂົາແລະ ໃຫ້ພອນໂດຍມູນ.

4. ກ່ຽວກັບອົງພຣະເຢຊູຄຣິດ,ມູນປະຕິເສດວ່າພຣະເຢຊູຊົງເປັນ ພຣະເຈົ້າອົງທ່ຽງແທ້ ຫລື ເທົ່າທຽມກັບພຣະບິດາ,ໂດຍພຣະອົງ ໄດ້ສຳເລັດຜົນ ແລະ ເປັນ ພຣະເຈົ້າ.

5. ປະຕິເສດຫລັກຄຳສອນຂອງພຣະເຈົ້າສາມພຣະພາກ.

6. ພຣະເຢຊູຄຣິດບໍ່ໄດ້ຟື້ນຄືນມາດ້ວຍຮ່າງກາຍ ສະນັ້ນຈຶ່ງການໄຖ່ທາງ ດ້ານຮ່າງກາຍແມ່ນຍັງບໍ່ສຳເລັດ.ພຣະເຢຊູຄຣິດຊົງຟື້ນຄືນມາແຕ່ວິນຍານ,ແລະ ການຄືນພຣະຊົນຂອງພຣະອົງໄຖ່ໄດ້ແຕ່ຈິດວິນຍານຂອງພວກເຮົາ ເທົ່ານັ້ນ.

7. ກ່ຽວກັບຊີວິດກັບຊີວິດຫລັງຄວາມຕາຍ,ມູນສອນວ່ານະລົກແມ່ນ ຄອງໂດຍຊາຕານເປັນບ່ອນສຳຫລັບວິນຍານຂອງຄົນຕາຍຜູ້ທີ່ປະຕິເສດພຣະເຈົ້າຢູ່ຊົ່ວຄາວ. ເມື່ອພຣະຜູ້ເປັນເຈົ້າສະເດັດມາຄັ້ງທີສອງຈະຊ່ວຍ ມະນຸດທັງໝົດ,ນະລົກກໍ່ຈະຖືກລົບລ້າງ.ສຸດທ້າຍມະນຸດຈະກາຍເປັນວິນຍານ ແລະ ຢູ່ສະວັນກັບພຣະເຈົ້າ.

## V. ການເຄື່ອນໄຫວຂອງຄົນຍຸກໃໝ່(NEW AGES MOVEMENT)

### *A. ເບື້ອງຫລັງຄວາມເປັນມາ*

ການເຄື່ອນໄຫວຂອງຄົນຍຸກໃໝ່ຖືກຈຳກັດຄວາມວ່າ “ ໂຄ່ງສ້າງເຄືອຄ່າຍອິດສະລະ ຂອງສ່ວນບຸກຄົນແລະອົງການຜູ້ຊຶ່ງແບ່ງປັນນິມິຂອງຄົນຍຸກໃໝ່ຂອງການສອນ ແລະ ການປອງດອງກັນ. *(the 'Age of Aquarius') ແລະ ຜູ້ຊຶ່ງມີການເບິ່ງໂລກໃນມູມມອງທີ່ຄ້າຍໆກັນ. ຄວາມຄິດນີ້ແມ່ນນຳມາຊຶ່ງທຸກສິ່ງນັ້ນເປັນໜຶ່ງ(monism), ທຸກສິ່ງນັ້ນແມ່ນພຣະເຈົ້າ(pantheism), ແລະ ມະນຸດສາມາດມີປະສົບການນີ້ກັບພຣະເຈົ້າ(mysticism).*

ການເຄື່ອນໄຫວຂອງຄົນຍຸກໃໝ່ ແມ່ນຈຸດສຳຄັນຂອງຄວາມຫລາກຫລາຍ ແລະ ການແບ່ງອຳນາດ.ບໍ່ມີບຸກຄົນ,ກຸ່ມຂອງຄົນ,ຫລື ອົງການ ທີ່ຈະຢືນຄືວ,ຫລາຍໄປກວ່າອົງການທີ່ມີການຈັດຕັ້ງດີ, ການສົມຮູ້ຮ່ວມຄິດ.ຢ່າງໃດ ກໍ່ຕາມເປັນແບ່ງປັນກ່ຽວກັບປັດສະຍາ,ການຮ່ວມມືກັນຂອງຄົນຍຸກໃໝ່ຕໍ່ກັບລະດັບຂອງຄວາມຫລາກຫລາຍ ແລະ ຢູ່ໃນຫົນທາງທີ່ຫລາກຫລາຍເພື່ອສະໜັບສະໜຸນ ຄວາມສົນໃຈດຽວກັນຂອງພວກເຂົາ.

ການເຄື່ອນໄຫວຂອງຄົນຍຸກໃໝ່ໄດ້ລວມຕົວກັນໃນຄວາມເຊື່ອຈາກຫລາຍຢ່າງມາປະສົມກັນ ແລະ ຄວາມຂັດແຍ້ງຕ່າງໆໃນຄວາມເຊື່ອຂອງພວກເຂົາ.ປັດສະຍາຂອງ ຄົນຍຸກໃໝ່ໄດ້ເຂົ້າໄປເຖິງຄວາມແຕກຕ່າງຫລາຍໆຢ່າງຂອງຊີວິ,ລວມໄປເຖິງການເບິ່ງແຍງສຸຂະພາບ,ເຊັ່ນ:

GCI

ການເບິ່ງແຍງສຸຂະພາບໂດຍລວມ, ຈິດຕະວິທະຍາ, ວິທະຍາສາດ,ການເມືອງ,(ລັດຖະບານດຽວ), ການສຶກສາແລະທຸລະກິດ.ເພາະວ່າ ການເຄື່ອນໄຫວຂອງຄວາມຫລາກຫລາຍ,ຈຳນວນຂອງຜູ້ປະກອບການໃນຍຸກໃໝ່ ແມ່ນເປັນໄປໄດ້ຍາກທີ່ຈະກຳນົດໄດ້.ໄດ້ມີການຕີພິມຫລາຍກວ່າ ສາມພັນຮູບແບບຂອງຄົນຍຸກໃໝ່ ແລະ ໜັງສືທີ່ລີ້ລັບ,ບັນທຶກ ແລະ ວາລະສານ.

*B.* *ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ.*

1. *ຜູ້ເຊື່ອໃນຍຸກໃໝ່ເຊື່ອວ່າພຣະຄຳພີໂດຍສະເພາະການສອນຂອງພຣະເຢຊູ,ແມ່ນມີການປົກປັງ,ມີຄວາມລັບ ,ມີພຽງຄົນສ່ວນໜ້ອຍທີ່ຈະເຂົ້າໃຈເຖິງຄວາມໝາຍຂອງມັນ.*
2. ກ່ຽວກັບການເປີດເຜີຍ,ພວກເຂົາເຊື່ອໃນຄວາມຫລາຍຫລາຍຂອງສາສະໜາໃນໂລກ ແລະ ຄູສອນສາສະໜາທີ່ຍິ່ງໃຫຍ່ທັງໝົດໄດ້ຢືນຢັນວ່າ ຄວາມຈິງຄົນໃນຍຸກໃໝ່ ມີກ່ຽວກັບ ລັດທິທີ່ເຊື່ອວ່າມີພຣະເຈົ້າຢູ່ ທຸກແຫ່ງ,ທິດສະດີທີ່ວ່າມີພຽງສິ່ງ ຫລື ຫລັກການດຽວເທົ່ານັ້ນທີ່ເປັນບັນທັດຖານຂອງຄວາມເປັນຈິງ,ແລະ ກ່ຽວກັບມະນຸດພະເຈົ້າ. ການເປີດເຜີຍອາດມາຈາກຄວາມຫລາກຫລາຍຂອງມິຕິພິເສດຕ່າງໆ,ລວມໄປເຖິງການບໍ່ລວມຕົວຂອງມະນຸດເຊັ່ນ :ການມີອຳນາດ. ການເປີດເຜີຍເຫລົ່ານີ້, ແມ່ນ ເປັນເອກະລັກ "*channelled*" ໂດຍຜ່ານບຸກຄົນຜູ້ຊຶ່ງກາຍເປັນຜູ້ຄວບຄຸມ ໂດຍວິນຍານທັງໝົດຂອງການເປີດເຜີຍຂໍ້ມູນ.
3. *ຄົນຍຸກໃໝ່ເຊື່ອວ່າພຣະເຢຊູເປັນໜຶ່ງໃນຫລາຍໆຄຳສອນສ່ວນຕົວຜູ້ຊຶ່ງເປີດເຜີຍຄວາມຈິງຂອງພຣະເຈົ້າຕໍ່ມະນຸດ. ພວກເຂົາໄດ້ເຮັດໃຫ້ແຕກຕ່າງລະຫວ່າງ ພຣະເຢຊູ ແລະ ພຣະຄຣິສ. ເຢຊູ ແມ່ນໝາຍເຖິງມະນຸດຊື່ເຢຊູ,ໃນຂະນະທີ່ ຄຣິສ ແມ່ນຖືກຈຳກັດຄວາມກ່ຽວກັບຈັກກະວານ,ພຣະເຈົ້າທີ່ແທ້ຈິງວ່າພຣະເຢຊູເປັນມະນຸດ. ບາງຢ່າງຂອງຄົນຍຸກໃໝ່ຍັງສອນວ່າພຣະເຢຊູໄດ້ໄປທາງທິດ ຕາເວັນອອກແລະ ໄດ້ບັນລຸຄຳສອນໂດຍຜ່ານການສອນຂອງ Eastern* gurus. ສະນັ້ນການສອນຂອງພຣະເຢຊູກາຍເປັນ “ຫົນທາງໃນການສະແດງ”ເໝືອນກັບຜູ້ບໍລິສຸດຄົນອື່ນໆເຊັ່ນພະ ແລະ ຄຣິສະນາ.
4. ກ່ຽວກັບພຣະເຈົ້າ,ແມ່ນໄດ້ຍຶດຫລັກທີ່ວ່າພຣະເຈົ້າຢູ່ທຸກຫົນທຸກແຫ່ງ. ຊຶ່ງພຣະເຈົ້າແມ່ນທຸກຢ່າງ ແລະ ທຸກຢ່າງແມ່ນພຣະເຈົ້າ.ພຣະເຈົ້າບໍ່ ໄດ້ເຫັນມາເປັນຕົວຕົນ ແຕ່ວ່າໄດ້ອະທິບາຍໃນຫລາຍໆດ້ານເຊັ່ນ ແຮງອຳນາດທີ່ບໍ່ມີຕົວຕົນ,ຫລື ຈິດສຳນຶກຂອງຈັກກະວານ, ຫລື ພະລັງງານ.
5. ໃນຫລັກຄຳສອນຂອງມະນຸດ,ພວກເຂົາຢືນຢັນວ່າມະນຸດເປັນພຣະເຈົ້າ.ເມື່ອທຸກຢ່າງເປັນພຣະເຈົ້າແລະທຸກຢ່າງນັ້ນເປັນໜຶ່ງ,ຊຶ່ງຕາມມາວ່າທຸກສິ່ງທີ່ມະນຸດມັກແມ່ນສ່ວນໜຶ່ງຂອງພຣະເຈົ້າ.ເປັນພຣະເຈົ້າ,ສຸດທ້າຍ ຄວາມສາມາດຂອງມະນຸດ ແມ່ນສາມາດສ້າງຄວາມຈິງຂອງລາວເອງ.
6. ຄວາມຄິດຂອງຄົນຍຸກໃໝ່ກ່ຽວກັບຄວາມລອດແມ່ນບໍ່ຈຳເປັນ.

ເມື່ອຄົນຍຸກໃໝ່ປະຕິເສດຄວາມຄິດກ່ຽວກັບຄວາມບາບ.ມະນຸດບໍ່ໄດ້ຖືກເຊື່ອງໂດຍບາບແຕ່ວ່າຜິດພາດໃນການໃຫ້ຄວາມສຳຄັນໃນຕົວເອງ. ສະນັ້ນພວກເຂົາຕ້ອງການ ການສອນ, ບໍ່ແມ່ນຄວາມລອດພົ້ນ. ຄົນຍຸກໃໝ່ຢືນຢັນໃນຫລັກຄຳສອນຂອງ ການເກີດໃໝ່,ໂດຍຜ່ານຜູ້ທີ່ໄດ້ລວມກັນພຣະເຈົ້າ.

## VI. ວິະຍາຄວາມຄດ (MIND SCIENCES)

*A.* *ເບື້ອງຫລັງຄວາມເປັນມາ*

GCI

ວິທະຍາຄວາມຄິດໄດ້ບັນຈຸເອົາສອງສາມລັດທິຊຶ່ງໄດ້ຮ່ວມກັນແບ່ງປັນເຖິງພາບ ຂອງພຣະເຈົ້າແລະຄວາມເປັນຈິງທາງທຳມະຊາດທາງປັດຊະຍາ.ພວກເຂົາເອີ້ນວ່າ "ວິທະຍາຄວາມຄິດ"ເພາະວ່າພວກເຂົາເວົ້າກັບພຣະເຈົ້າເຖິງຫລັກການທີ່ ບໍ່ໄດ້ເວົ້າສະເພາະເຈາະຈົງຜູ້ໃດ, "ຄວາມຄິດຂອງພຣະເຈົ້າ" ກຸ່ມວິທະຍາຄວາມຄິດສອນວ່າຄວາມຄິດຂອງພຣະເຈົ້າກໍ່ໃຫ້ເກີດຄວາມຈິງທັງໝົດ: ໂລກແຫ່ງວັດຖຸທີ່ບໍ່ຍືນຍົງ ຫລື ອີກຢ່າງໜຶ່ງລັກສະນະຂອງຄວາມຄິດຂອງ ພຣະເຈົ້າ.ສະນັ້ນຄຳສອນຂອງວິທະຍາຄວາມຄິດແມ່ນລັດທິພຣະເຈົ້າຄວບຄຸມທັງໝົດຂອງຈັກກະວານ,ພຣະເຈົ້າຢູ່ໃນທຸກສິ່ງທີ່ມີຊີວິດ.

ພວກເຮົາຈະກ່າວເຖິງພຽງແຕ່ສາມກຸ່ມທີ່ໃຫຍ່ທີ່ສຸດ.

*ວິທະຍາຄຣິສະຕຽນ(CS)ໄດ້ແຕ່ງຕັ້ງຂຶ້ນໂດຍ ທ່ານ ແມລີ ເບເກີ ເອັດດີ້ (Mary Baker Eddy)ໃນປີ 1879 . ທັດສະນະຂອງລາວໄດ້ຕັ້ງໄວ້ໃນໜັງສືຂອງລາວ: ວິທະຍາແລະສຸຂະພາບກັບກະແຈຕໍ່ກັບພຣະຄຳພີ.* "*Metaphysical healing*" ແມ່ນສ່ວນທີ່ສຳຄັນຂອງການສອນແລະເປັນສ່ວນທີ່ສຳຄັນຫລາຍທາງຄວາມເຊື່ອຂອງວິທະຍາຄຣິສະຕຽນ.ໃນປະຈຸບັນແມ່ນມວິທະຍາຄຣິສະຕຽນປະມານ 250,000.

*ວິທະຍາສາສະໜາ (RS),* ກໍ່ຍັງເປັນທີ່ຮູ້ຈັກໃນວິທະຍາຄວາມຄິດ,ຊຶ່ງໄດ້ກໍ່ຕັ້ງໂດຍ ທ່ານ also *Ernest Holmes* ໃນປີ 1927. ງານຫລັກໆຂອງລາວມີຊື່ວ່າ: ວິທະຍາຂອງຄວາມຄິດ.ພວກເຂົາມີສະມາຊິກປະມານ 600,000 ແລະ ເປັນລັດທິທີ່ມີການຈະເລີນເຕີບໂຕໄວທີ່ສຸດວິທະຍາຄວາມຄິດ.

*Unity School of Christianity (USC)* ແມ່ນໄດ້ກໍ່ຕັ້ງຂຶ້ນໂດຍ ທ່ານ*Charles ແລະ Myrtle Fillmore* ໃນທ້າຍປີ 1800.ມີສະມາຊິກປະມານ 10,000 ໃນຫລາຍກວ່າ300 ຄຣິສຕະຈັກ.

*B. ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ.*

1. ກ່ຽວກັບການເປີດເຜີຍ.
*ໂຮງຮຽນທີ່ເປັນໜຶ່ງດຽວຂອງຄຣິສະຕຽນ ແລະ ວິທະຍາສາສະໜາສອນວ່າ ຄວາມຈິງໄດ້ພົບຢູ່ໃນພຣະຄຳພີຂອງຫລາຍໆສາສະໜາ,ສະນັ້ນມັນຈຶ່ງຖືກສອນຢ່າງຊັດເຈນ ແລະ ເຕັມທີ່ຢູ່ໃນແຕ່ລະກຸ່ມສາສະໜາຂອງຕົນເອງ.ພຣະຄຳພີ ເຫລົ່ານີ້ລວມມີ ພຣະຄຳພີຂອງຄຣິສະຕຽນ,ຕ້ອງແປໃຫ້ເປັນປັດຊະຍາທີ່ ກ່ຽວກັບຄວາມຈິງໃນທຳມະຊາດ ຊຶ່ງບໍ່ມີສິ່ງໃດທີ່ຍືນຍົງຢູ່ໄດ້ແທ້ໆ.*

*ວິທະຍາຄຣິສະຕຽນໄດ້ອ້າງວ່າຄຣິສະຕຽນທີ່ແທ້ຈິງສາມາດເຂົ້າໃຈໄດ້ໂດຍຜ່ານວິທະຍາສຸຂະພາບຂອງ Eddy.*

2. ພຣະເຈົ້າສາມາດພົບເຫັນໄດ້ຈາກ ວິທະຍາຄວາມຄິດຂອງພຣະເຈົ້າ,ຊຶ່ງບໍ່ ໄດ້ເປີດເຜີຍໃຫ້ເຫັນໂດຍສ່ວນຕົວເທື່ອ. ພຣະເຈົ້າ, "*ມັນ,*" ແມ່ນຫລັກຄຳສອນຂອງພຣະເຈົ້າສາມຝ່າຍ.ຫລື ວິທະຍາ: ຊີວິດ,ຄວາມຈິງ ແລະ ຄວາມຮັກ. ພຣະເຈົ້າແມ່ນ "*Allinall.*"ທຸກໆສິ່ງໃນຈັກກະວານແມ່ນ ເຂົ້າຮ່ວມກັນທັງໝົດ,ສະແດງອອກຄື "*ທັງໝົດໃນໜຶ່ງ.*"

3. ວິທະຍາຄຣິສະຕຽນໄດ້ປະຕິເສດການຍືນຍົງຂອງໂລກວັດຖຸ:ມັນ ເປັນຂອງລວງຕາ,ແລະມັນບໍ່ຍືນຍົງຄືງຕົວແທ້.ວິທະຍາສາສະໜາແລະໂຮງຮຽນທີ່ເປັນໜຶ່ງຂອງຄຣິສະຕຽນຢືນຢັນວ່າຄວາມເປັນຈິງຂອງວັດຖຸ,ແຕ່ວ່າໄດ້ເວົ້າວ່າຈັກກະວານວັດຖຸແມ່ນຮ່າງກາຍຂອງພຣະເຈົ້າ;ພຣະອົງຢູ່ໃນທຸກສິ່ງແຕ່ວ່າຍິ່ງໃຫຍ່ກວ່າທຸກສິ່ງ(ລັດທິພຣະເຈົ້າຄືຈັກກະວານ)

GCI

4. ພຣະເຢຊູແມ່ນມະນຸດແທ້ໆ,ຄວາມຄິດຂອງພຣະຜູ້ເປັນເຈົ້າ,ຫລື ຄວາມຄິດ ຂອງພຣະເຈົ້າ,ຢູ່ໃນຮູບແບບຂອງຮ່າງກາຍ.ພຣະເຢຊູເປັນພຣະບຸດຂອງພຣະເຈົ້າແຕ່ບໍ່ແມ່ນພຣະເຈົ້າພຣະບຸດ.ເຢຊູບໍ່ແມ່ນພຣະຄຣິດ:ແທ້ໆແລ້ວ "*ພຣະຄຣິດ*" ອ້າງອີງເຖິງການປະກົດຂອງພຣະຜູ້ເປັນເຈົ້າຂອງພຣະເຈົ້າ. ຊຶ່ງມາດ້ວຍຮ່າງກາຍເພື່ອທຳລາຍການເກີດໃໝ່ທີ່ລົ້ມນັ້ນ. ວິທະຍາສາສະໜາ ໄດ້ຢືນຢັນວ່າເຢຊູກາຍເປັນພຣະຄຣິດ,ດັ່ງທີ່ທຸກຄົນສາມາດເປັນໄດ້.ແຕ່ວ່າຕາມຄວາມຖືກຕ້ອງພຣະຄຣິສແມ່ນເປັນຜູ້ສູງສຸດຂອງທຸກໆຄົນ.ທຸກໆກຸ່ມວິທະຍາຄວາມຄິດ ສອນວ່າພຣະເຢຊູແມ່ນວິທີພວກເຮົາສະແດງກ່ຽວກັບຄວາມລອດ ແຕ່ວ່າ ພຣະອົງບໍ່ສາມາດຊ່ວຍເຫລືອພວກເຮົາໄດ້. ພຣະເຢຊູແມ່ນຜູ້ມີອຳນາດ ທີ່ສອນຄວາມຈິງຂອງວິທະຍາພຣະຜູ້ເປັນເຈົ້າ.ລາວໄດ້ສອນວ່າຕ້ອງແປຄວາມໝາຍໃຫ້ເປັນກ່ຽວກັບປັດຊະຍາທີ່ຄວາມຈິງກ່ຽວກັບທຳມະຊາດ.

5. ມະນຸດແມ່ນສົມບູນ,ເປັນນິລັນ ແລະ ປາສະຈາກບາບ(ເພາະວ່າຄວາມ ບາບບໍ່ມີຈິງ).ພວກມັນເປັນສ່ວນໜຶ່ງຂອງພຣະເຈົ້າ.ວິທະຍາສາສະໜາ ແລະ ໂຮງຮຽນທີ່ເປັນໜຶ່ງຂອງຄຣິສະຕຽນ ສອນວ່າ ຮ່າງກາຍຂອງມະນຸດ, ແມ່ນຄືກັບວັດຖຸ,ເຊິ່ງສະແດງເຖິງຄວາມຄິດຂອງພຣະເຈົ້າ.

6. ກ່ຽວກັບການຕາຍຂອງພຣະເຢຊູຄຣິສແລະການຄືນພຣະຊົນ, ຄວາມບາບແມ່ນເປັນສິ່ງຫລອກລວງ,ພຣະເຢຊູບໍ່ໄດ້ຕາຍເທິງໄມ້ກາງແຂນ. ເພາະວ່າການຟື້ນຄືນຂອງຮ່າງກາຍແມ່ນບໍ່ຈຳເປັນ.

7. ຄວາມບາບ,ວັດຖຸ,ຄວາມຊົ່ວ,ພະຍາດ ແລະ ຄວາມຕາຍແມ່ນສິ່ງບໍ່ຈິງ ແລະ ເປັນສິ່ງຫລອກລວງ;ພວກມັນເປັນຮູບແບບການທຳລາຍຂອງຄວາມຄິດ.

8. ມະນຸດແມ່ນໄດ້ມີຄວາມລອດພົ້ນທີ່ເປັນນິລັນແລ້ວ;ບໍ່ມີການພິພາກສາຄັ້ງສຸດ ທ້າຍ. "*ຄວາມລອດພົ້ນ*" ເປັນຄວາມປອດໄພຈາກຄວາມຜິດພາດຂອງບາບ, ໂລກໄພໄຂ້ເຈັບ,ແລະ ການຕາຍທີ່ຄິງຢູ່. ມະນຸດຕ້ອງຊະນະຄວາມບໍ່ຮູ້ຂອງ ພວກເຂົາວ່າເປັນໜຶ່ງດຽວກັບພຣະເຈົ້າແລ້ວ.ອີກຢ່າງໜຶ່ງ,ວິທະຍາຄຣິສະຕຽນໄດ້ຢືນຢັນວ່າບໍ່ມີທາງໄປເ ມະນຸດຕ້ອງຊະນະຄວາມບໍ່ຮູ້ຂອງ ພວກເຂົາວ່າເປັນໜຶ່ງດຽວກັບພຣະເຈົ້າແລ້ວ.ອີກຢ່າງໜຶ່ງ,ວິທະຍາຄຣິສະຕຽນໄດ້ຢືນຢັນວ່າບໍ່ມີທາງໄປເ ຖິງຣຊະອານາຈັກສວັນໄດ້ນອກຈາກການປະຕິບັດຂອງວິທະຍາຄຣິສະຕຽນ.

9. ພິເສດໂຮງຮຽນໜຶ່ງດຽວຂອງຄຣິສະຕຽນແມ່ນມີຄຳສອນເຖິງການ ເກີດໃໝ່.ຫລັງຄວາມຕາຍ,ວິຍານຈະຫລັບຈົນເຖິງຊາດໜ້າ.ການເກີດໃໝ່ທີ່ຕໍ່ເນື່ອງກັນແມ່ນເປັນຮູບແບບຂອງການເປັນມະນຸດແບບອື່ນໆ.ການເກີດໃໝ່ແຕ່ລະຄັ້ງແມ່ນກິດຈະການໜຶ່ງຂອງ "*karma*"ແລະ ເປັນບາດກ້າວໄປເຖິງລະດັບຕໍ່ໄປ ຂອງການມີຊີວິດຢູ່,ໃນທີ່ສຸດກໍ່ແມ່ນຈຸດ ສຸດຍອດໃນຊີວິດອັນນິລັນ.

## VII. ຄຣສຕະຈກ "ພຣະເຢຊູດຽວ" ('JESUS ONLY' CHURCH)

### *A. ເບື້ອງຫລັງຄວາມເປັນມາ*

ຄຣິສຕະຈັກ"*ພຣະເຢຊູດຽວ*" ແມ່ນໄດ້ຖືກອ້າງເອີ້ນເໝືອນກັນເພາະວ່າ ພວກເຂົາປະຕິເສດກ່ຽວກັບກົດຂອງການຕັ້ງຊື່ພຣະເຈົ້າ(ໃນພຣະນາມຂອງພຣະບິດາ,ພຣະບຸດ ແລະ

GCI

ພຣະວິນຍານບໍລິສຸດ),ການຮັບບັບຕິສະມາພຽງແຕ່ໃນນາມຂອງອົງ ພຣະເຢຊູ.ພວກເຂົາກໍ່ໄດ້ຊື່ວ່າ ຄຣິສຕະຈັກ"ຄວາມເປັນໜຶ່ງ"ເພາະພວກເຂົາເຊື່ອວ່າ ບໍ່ມີພຽງແຕ່ພຣະບິດາ,ພຣະບຸດ ແລະ ພຣະວິນຍານບໍລິສຸດແມ່ນໜຶ່ງດຽວທີ່ມີ ເນື້ອໜັງ. (ຊຶ່ງຖືກຕ້ອງ).ເພາະສະນັ້ນພຣະເຢຊູແມ່ນພຣະບິດາ,ພຣະເຢຊູແມ່ນພຣະ ວິນຍານ,ພຣະວິນຍານແມ່ນພຣະບິດາ, ແລະ ອື່ນໆ ຄຳສອນນີ້ກໍ່ເປັນທີ່ຮູ້ຈັກ ໃນ"*modalism*" ເພາະວ່າມີພຣະເຈົ້າດຽວ, ຊຶ່ງພວກເຂົາໄດ້ເວົ້າວ່າຍັງເປັນບຸກ ຄົນໜຶ່ງ,ສະແດງເຖິງພຣະອົງເອງໃນຄວາມຕໍ່ເນື່ອງຂອງສາມແບບທີ່ແຕກຕ່າງກັນ.

ຄຣິສຕະຈັກໄດ້ຄຳນຶງເຖິງສິ່ງນີ້ວ່າມານອກຈາກການຊຸມນຸມຂອງພຣະເຈົ້າ ຢູ່ໃນຍຸກເລີ່ມຕົ້ນປ 1900. ໃນປີ1916 ໄດ້ຮັບເອົາຫລັກຄຳສອນວ່າ ກຳນົດເງື່ອນໄຂທີ່ຊັດເຈນ ກ່ຽວກັບຄວາມເຊື່ອໃນພຣະເຈົ້າສາມພຣະພາກ, ດັ່ງນັ້ນຈຶ່ງບັງຄັບຜູ້ຕິດຕາມໃຫ້ເປັນໜຶ່ງດຽວ,ຜູ້ທີ່ໄດ້ຈັດຮູບແບບຂອງເຂົາເອງໃນການຕັ້ງຊື່ ແລະ ສະມາຄົມ. ເຖິງແມ່ນວ່າມີປະມານເກົ້າສິບຄວາມເປັນໜຶ່ງດຽວ ທີ່ແຕກຕ່າງກັນໃນການຕັ້ງຊື່, *United Pentecostal Church International (UPCI)* ຊຶ່ງເປັນກຸ່ມທີ່ໃຫຍ່ທີ່ສຸດ,ກັບສະມະຊິກເກືອບລ້ານຄົນໃນທົ່ວໂລກ.ພວກເຂົາ ຄຸ້ນເຄີຍກັບຄວາມໝາຍຂອງນິກາຍຫລາຍກວ່າລັດທິ.

## B. *ສະຫລຸບລວມຄຳສອນທີ່ບໍ່ໄດ້ມາຈາກພຣະຄຳພີ.*

1. ກ່ຽວກັບພຣະເຢຊູຄຣິດ,ພັກຄວາມເປັນໜຶ່ງເຊື່ອວ່າພຣະເຢຊູແມ່ນພຣະ ເຈົ້າ . ແຕ່ວ່າພວກເຂົາຈະບອກວ່າພຣະເຢຊູແມ່ນພຣະບິດາ ແລະ ພຣະວິນຍານບໍລິສຸດ,ການຂັດແຍ້ງໃນການເກີດໃໝ່.ດັ່ງໃນບັນທຶກ,ນີ້ແມ່ນການກ່າວຄືນເຖິງບັນພະບູລຸດ ທີ່ມີຄວາມເຫັນນອກຮີດຊຶ່ງຮູ້ຈັກໃນຖານະ ລັດທິນິຍົມ modalism.

2. ດັ່ງທີ່ພຣະເຢຊູເປັນລູກຊາຍ,ພວກເຂົາຢືນຢັນວ່າພຣະເຢຊູແມ່ນພຣະບຸດ (ໃນບາງຄວາມຄິດທີ່ວ່າ ພຣະເຢຊູບຸດມະນຸດ ຫລື ບຸດພຣະເຈົ້າ)ພຽງແຕ່ໃນເກີດໃໝ່.ຕໍ່ກັບພວກເຂົາ,ຄຳທີ່ວ່າ "ພຣະບຸດ " ກ່ຽວກັບທຳມະຊາດມະນຸດຂອງພຣະເຢຊູຄຣິສ. ສະນັ້ນ,ຜູ້ທີ່ເຊື່ອໃນຄວາມເປັນໜຶ່ງປະຕິເສດຄວາມນິລັນຂອງພຣະເຢຊູຄຣິດ, ລູກຂອງຜູ້ທີ່ເປັນຢູ່ກ່ອນ.ກ່ອນການເກີດໃໝ່,ພຣະເຈົ້າສາມາດມີຄວາມມຸ້ງໝາຍວ່າ ພຣະຄຳ ຜູ້ແມ່ນພຣະບິດາແຕ່ບໍ່ແມ່ນບຸດ.ດັ່ງໃນການເກີດໃໝ່,ພຣະເຈົ້າ ນຶກເອົາບົດບາດຂອງລູກຊາຍສຳຫລັບເປົ້າໝາຍຂອງແຜນການໄຖ່,ແຕ່ວ່າບົດບາດນີ້ແມ່ນຈະມີການສິ້ນສຸດ (ໃນຍຸກສຸດທ້າຍ).

3. ສາສະໜາສາດຄວາມເປັນໜຶ່ງ ປະຕິເສດລັກສະນະພິເສດຂອງການບໍ່ມີເຫດຜົນ ແລະ ບໍ່ຖືກຕາມພຣະຄຳພີຢູ່ໃນຄວາມເປັນເທບ. ພຣະເຢຊູ,ພຣະບິດາ,ແລະ ພຣະວິນຍານບໍລິສຸດແມ່ນໜຶ່ງແລະເປັນບຸກຄົນດຽວກັນ.ພຣະຄຳພີທີ່ສະແດງໃຫ້ເຫັນເຖິງການເປີດເຜີຍລັກສະນະພິເສດລະຫວ່າງພຣະເຢຊູ ແລະ ບິດາ ຫລື ພຣະວິນຍານບໍລິສຸດແມ່ນໄດ້ເປີດເຜີຍລັກສະນະພິເສດລະຫວ່າງພຣະຜູ້ເປັນເຈົ້າ ແລະ ທຳມະຊາດມະນຸດຂອງການເກີດໃໝ່ຂອງພຣະເຢຊູ.

   ຄຳຕອບ: **1 ໂຢຮັນ 4:14; ໂຢຮັນ14 :16-17**

4. ກ່ຽວກັບຄວາມລອດ,ຜູ້ຂຽນເຖິງຄວາມເປັນໜຶ່ງໄດ້ເຫັນດີກັບປະຫວັດ ສາດຂອງ orthodoxy ໃນການຢືນຢັນວ່າຜູ້ໜຶ່ງຕ້ອງເກີດອີກຄັ້ງ ເພື່ອໄດ້ຮັບຄວາມລອດ.ແຕ່ວ່າກົງກັນຂ້າມພຣະຄຳພີສອນເຖິງເຫດຜົນໂດຍຄວາມເຊື່ອຢ່າງດຽວ,ສາສະໜາສາດຂອງຄວາມເປັນໜຶ່ງຢືນຢັນວ່າ

GCI

ການເກີດໃໝ່ຕ້ອງມີການຄວາມເຊື່ອ,ການກັບໃຈໃໝ່,ຮັບບັບຕິສະມາດ້ວຍນ້ຳ,ແລະ ຮັບບັບຕິສະມາໂດຍພຣະວິນຍານບໍລິສຸດ.

**ຄຳຕອບ**: **ໂຢຮັນ1:12; 3.15-16**

5. ບັບຕິສະມາດ້ວຍນ້ຳ,ຊຶ່ງມີຄວາມຈຳເປັນຕໍ່ເລື່ອງຄວາມລອດ,ຈຳເປັນຕ້ອງມີ ການຈຸ່ມ ແລະ ໃຫ້ສັນຍາໃນນາມຂອງພຣະເຢຊູເທົ່ານັ້ນ.

   **ຄຳຕອບ**: ຄົນຂີ້ລັກເທິງໄມ້ກາງແຂນ: **ລູກາ 23.42-43.**

6. ຢ່າງດຽວກັນ,ການຮັບບັບຕິສະມາໃນພຣະວິນຍານບໍລິສຸດແມ່ນມີຄວາມ ສຳຄັນຕໍ່ກັບຄວາມລອດ ແລະ ຈະບໍ່ເກີດຂຶ້ນໂດຍປາສະຈາກ "*ຫລັກຖານຕັ້ງແຕ່ດັ້ງເດີມ*" ຂອງການເວົ້າພາສາແປກໆ.

   **ຄຳຕອບ**: **ເອເຟໂຊ 2:89; 1 ໂກລິນໂທ 12:30**

## VIII. ເຊເວນເດ-ແອດແວນຕສ (SEVENTHDAY ADVENTIST)

### A. *ເບື້ອງຫລັງຄວາມເປັນມາ*

ຈາກການໂຕ້ຖຽງທີ່ລູກລາມມາເປັນສະຕະວັດຫລືວ່າ ກຸ່ມສາສະໜານີ້ແມ່ນລັດທິ. ຫລັກຖານຢູ່ໃນຫົວຂໍ້ນີ້ແມ່ນທັງສອງດ້ານ.ບໍ່ມີຜູ້ໃດເວົ້າວ່າເຊເວັນເດ-ແອັດແວັນຕິສທ໌ແມ່ນລັດທິມີລະດັບທີ່ເທົ່າທຽມກັນກັບມໍມັອນ ຫລື ພະຍານພຣະເຢໂຮວາເປັນຕົ້ນ.ແຕ່ວ່າ,ໃນທາງປະຫັວດສາດ,ແລະ ຫລັກຄຳສອນໃນປະຈຸບັນນີ້,ສາມາດເວົ້າໄດ້ວ່າກຸ່ມນີ້ມີລັກສະນະເປັນລັດທິ.

ໃນຫລາຍໆສ່ວນ,ທ່ານ ວິນລ່ຽມ ມີເລີ,ຜູ້ຮັບໃຊ້ທີ່ມີສິດທິທີ່ໄດ້ຮັບອະນຸຍາດຢູ່ໃນອາເມລິກາ,ອາດຈະບອກລ່ວງໜ້າມາກ່ອນວ່າເຊເວັນເດ-ແອັດແວັນຕິສເຖິງແມ່ນວ່າລາວບໍ່ເຊື່ອມຕໍ່ກັບການເຄື່ອນໄຫວ.ມັນເປັນເວລາຂອງລາວທີ່ໄດ້ຈັດຂຶ້ນສຳຫລັບການກັບມາຄັ້ງທີ່ສອງຂອງອົງພຣະເຢຊູຄຣິດ,ຊຶ່ງເຮັດໃຫ້ຄຣິສະຕຽນຫລາຍຄົນຢາກຮູ້ຈັກແລະ ເຮັດໃຫ້ມີນັກທຳນວຍທີ່ໄດ້ເຄົາຢູ່ໃນປີ 1830 ແລະ ໃນຕົ້ນປີ 1840 ຈາກນີ້ຈຶ່ງມີຊື່ ວ່າ, "*ແອັດເວັນທິສທ໌.*"

ເມື່ອບໍ່ມີຫຍັງເກີດຂຶ້ນໃນ ວັນທີ22 ຕຸລາ ປີ 1844 ໃນເວລາທີ່ກ່ຽວກັບ "*ການສູນເສຍຄັ້ງຍິ່ງໃຫຍ່*"ແລະ ຄົນອື່ນໆກໍ່ໄດ້ປັບປຸງ. ການປັງປຸງໜຶ່ງທີ່ເປັນນິມິດວ່າ ພຣະເຢຊູຈະບໍ່ກັບມາໃນໂລກນີ້ຕາມວັນເວລາແຕ່ວ່າ ຈະມາໂດຍຄວາມບໍລິສຸດ ຕໍ່ການ "*ລົບລ້າງຂອງບາບ*"ຂອງຜູ້ທີ່ເຊື່ອທີ່ຕາຍໄປແລ້ວ. ສິ່ງນີ້ຈະໄດ້ຮັບການພັດທະນາຕໍ່ມາ ແລະ ກາຍເປັນຫລັກຄຳສອນຂອງ "*ການພິພາກສາຂອງຜູ້ສອບສວນ*"ຊຶ່ງເຮັດໃຫ້ມີການເຄື່ອນໄຫວຢູ່ໃນລັດທິ.

ໃນຄວາມນິມິດຝັນຂອງ *Ellen G. White* ເບິ່ງຄືວ່າ ເປັນອິດທິພົນທີ່ຢູ່ເບື້ອງ ຫລັງຂອງການສ້າງ ເຊເວັນເດ-ແອັດແວັນທິສ. ລາວໄດ້ເຮັດໃຫ້ມີຄວາມເຊື່ອຖື ສຳຫລັບຄວາມໝັ້ນຄົງຂອງການກະຈັດກະຈາຍຂອງ *Millerites* ແລະ *Adventists* ໃນ *ການລວມຕົວກັນເປັນນິກາຍ.ສອງເດືອນຫລັງຈາກ ຄວາມສິ້ນຫວັງທີ່ຍິ່ງໃຫຍ່ ມີຜູ້ໜຶ່ງອາຍຸ 17ປີໄດ້ນິມິດທຳອິດຂອງລາວ.ລາວໄດ້ເຫັນ ແອັດແວັນທິດສ ແລະ ທາງ ໄປສູ່ສະຫວັນ ແລະ ຜູ້ທີ່ສົງໃສຄວາມຈິງຂອງຊາວແອັດ ແວນທິສຈະຖືກປະຕິເສດ.*

ນິມິດອັນຕໍ່ໄປຂອງລາວ,ສອງເດືອນຫລັງຈາກນັ້ນ,ໄດ້ຂະຫຍາຍກ້ວາງອອກຈາກນິມິດເດີມວ່າພຣະເຈົ້າປິດປະຕູຄວາມລອດຕໍ່ຄົນທີ່ບາບ ໃນວັນທີ່ 22 ຕຸລາ.ນິມິດອັນຕໍ່ໄປຂອງລາວໄດ້ຢືນຢັນເຖິງວັນຊາບາໂຕໃນວັນທີ່ເຈັດວ່າ

GCI

ໂຢເຊັຍ ໄດ້ຖືກສະໜັບສະໜຸນ.ສໍາຫລັບບໍ່ຫລາຍປີຕໍ່ໄປ ລາວແລະກຸ່ມຜູ້ເຊື່ອໄດ້ເລືອກ *'ຜູ້ຮັກສາວັນທໍາມະ ແລະ ປິດປະຕູ'* ແອັດແວັນຕິສທ໌s.

ນີ້ເປັນເວລາຂອງຜູ້ທໍານອຍຫລາຍໆຄົນຂອງ *White* ການປະກົດຂຶ້ນເໜືອສິ່ງທີ່ມີ ໂດຍການ ສະເໜີການຢືນຢັນຈາກອົງພຣະຜູ້ເປັນເຈົ້າໂດຍສ່ວນຕົວຕໍ່ຜູ້ທີ່ຕ້ອງການ ການເສີມສ້າງ.ນາງໄດ້ ລົ້ມລົງພື້ນເປັນລົມ ຍາວນານຈາກນາທີໄປສູ່ຊົ່ວໂມງ. ເມື່ອນິມິດຂອງນາງໝົດໄປ ລາວໄດ່ຍ່າງແບບບໍ່ມີແຮງ ແລະ ໄດ້ຮັບຄວາມຊ່ວຍເຫລືອໃຫ້ໄປນັ່ງບ່ອນຂອງລາວ.

ເຖິງຈຸດໜຶ່ງ,ສາມີຂອງນາງ, ທ່ານ ເຈມ ໄວ ເລ ຜູ້ເທດຊາວແອັດແວັນຕິສທ໌,ກັບ ອອກໄປຈາກ ຄວາມຮຸນແຮງຂອງລາວ ໄດ້ຮັບຮອງເອົານາງ.ຄົນສ່ວນໃຫຍ່ ສະໜັບສະໜຸນເມຍຂອງລາວ,ແຕ່ວ່າຮຸນແຮງນັ້ນຫລາຍກ່ວາທີ່ລາວຈະຄິດ, ແລະ ລາວ ໄດ້ຖາມທີ່ຈະລົງຈາກຈຸດນີ້ ແລະ ຫລັງຈາກນັ້ນເພື່ອຂໍໂທດສໍາຫລັບການດູໝິ່ນ ນິມິດຂອງເມຍຂອງລາວ. ຈາກນັ້ນນາງ ໄວກໍ່ເຕັມໄປດ້ວຍການຊົງສະຖິດຂອງພຣະຄໍາທີ່ເປັນນິມິດຂອງລາວ.

***B. ສະຫລຸບລວມຄໍາສອນທີ່ບໍ່ໄດ້ມາຈາກພຣະຄໍາພີ***

1. *ສ່ວນຫລາຍ ຄະນະເຊເວັນເດ ແອັດແວັນຕິສທ໌ບໍ່ສາມາດບອກໄດ້ ເລື່ອງການພິພາກກ່ຽວກັບຜູ້ສືບສວນວ່າແມ່ນຫຍັງ ແລະ ອາຈານຫລາຍ ຄົນ ບໍ່ໄດ້ສອນກ່ຽວກັບເລື່ອງນີ້. ແຕ່ວ່າສ່ວນສໍາຄັນຂອງການຢືນຢັນໃນຄວາມ ເຊື່ອຂອງນິກາຍນີ້ແມ່ນໄດ້ອຸທິດຕໍ່ຫລັກຄໍາສອນນີ້.*

    ຫົວເລື່ອງທີ່23ສະບັບປັບປຸງໃໝ່ໃນປີ 1980 ຂອງການຢືນຢັນໄດ້ຮັບຮອງ ວ່າ "ໃນປີ 1844 ໃນວາລະສຸດທ້າຍຂອງເວລາ2300ວັນ," ພຣະເຢຊູ "ຈະ ສະເດັດມາຄັ້ງທີ່ສອງ ແລະ ເຮັດພັນທະກິດການໄຖ່ບາບຄັ້ງສຸດທ້າຍ " ແລະນັ້ນແມ່ນ "ການພິສາຂອງຜູ້ສືບສວນຊຶ່ງແມ່ນການຈັດການກັບ ຄວາມບາບຄັ້ງສຸດທ້າຍ . . ." ແລະມັນສືບຕໍ່ໃນປະຈຸບັນນີ້.

    ດັ່ງທີ່ *Ellen White ໄດ້ບອກໄວ້ວ່າ, ດັ່ງນາມຊື່ທີ່ມາກ່ອນພຣະຜູ້ເປັນເຈົ້າ ຄວາມຈິງກ່ຽວກັບຄວາມດີແລະ ຄວາມຊົ່ວ, ທີ່ມີຢູ່ໃນໜັງສື ທີ່ໄດ້ ກ່າວໄວ້ໃນພຣະຄໍາ* ***ພະນິມິດ 20:12*** ເປັນນາມຊື່ທີ່ໄດ້ຮັບການຍອມຮັບ, ທັງຈະຖືກປະຕິເສດ "ການສືບສວນໃກ້ເຂົ້າມາແລ້ວ".ຜູ້ທີ່ປະຕິເສດແມ່ນ "ຍັງມີຄວາມບາບທີ່ໄດ້ບັນທຶກໄວ້ໃນໜັງສື, ບໍ່ໄດ້ກັບໃຈ ແລະ ບໍ່ໄດ້ຮັບການອະໄພ."ຜູ້ທີ່ຍອມຮັບແມ່ນຜູ້ທີ່ກັບໃຈຈາກບາບ ແລະ ໂດຍຄວາມ ເຊື່ອທີ່ກ່າວເຖິງໂລຫິດຂອງພຣະຄຣິດໃນການເປັນເຄື່ອງບູຊາເພື່ອໄຖ່ບາບ... ແລະ ລັກສະນະຂອງພວກເຂົາແມ່ນເຫັນໄດ້ຊຶ່ງມີຄວາມສອດຄ່ອງກັບກົດ ຂອງພຣະເຈົ້າ, ຍັງຜູ້ທີ່ພຽງແຕ່ຈະມີບາບຂອງເຂົາ *"ການລົບລ້າງ, ແລະ ພວກເຂົາຈະໄດ້ມີສ່ວນຂອງຊີວິດອັນນິລັນ."*

    **ຄໍາຕອບ**:ບໍ່ມີໃນພຣະຄໍາພີເລີຍຕໍ່ກັບການເດົານີ້.

2. ການຕາຍ ແລະ ການຫລັ່ງໂລຫິດຂອງພຣະເຢຊູຢູ່ເທິງໄມ້ກາງແຂນ ແມ່ນພຽງແຕ່ສໍາຫລັບການໃຫ້ອະໄພບາບ, ແຕ່ວ່າບໍ່ສາມາດລົບລ້າງຄວາມ ບາບຂອງພວກເຮົາ.ພວກເຂົາອະທິບາຍວ່າ: "ການລົບລ້າງບາບທີ່ແທ້ຈິງ ບໍ່ສາດຖືກແທນໄດ້ໃນຂະນະທີ່ຄວາມບາບ ໄດ້ຮັບການອະໄພ, ເພາະວ່າ ການກະທໍາພາຍຫລັງ ແລະ ທັດສະນະຄະຕິອາດ ມີຜົນການຕັດສິນຄັ້ງສຸດທ້າຍ.ຄວາມບາບຍັງຄົງຢູ່ໃນການບັນທຶກຈົນກ່ວາຊີວິດຈະຈົບສິ້ນ. ຄວາມຈິງແລ້ວພຣະຄໍາພີໄດ້ບອກວ່າຈະມີຈົນກວ່າວັນ ແຫ່ງການພິພາກສາ." ເຖິງແມ່ນວ່າຫລັງຈາກຊີວິດທີ່ໄດ້ສູນໄປກ່ອນການ ພິພາກສາ ແລະ ໄດ້ຮັບການຍອມຮັບ ແຕ່ຄວາມບາບກໍ່ຍັງຄົງຢູ່ "ຢູ່ເໜືອຊາຕານ ຜູ້ຢູ່ໃນຄວາມສໍາເລັດຂອງການພິພາກສາຕ້ອງໄດ້ຮັບການ

GCI

ລົງໂທດໃນຄາວສຸດທ້າຍ" ເພາະວ່າລາວເປັນຜູ້ລິເລີ່ມ ແລະ ເປັນຜູ້ ເຮັດໃຫ້ມີຄວາມບາບ. ຜູ້ຮັບບາບ, ເຊັ່ນຜູ້ທີ່ເຮັດບາບຂອງຊາວອິດສະຣາ ເອນແມ່ນໄດ້ຖືກເນລະເທດ, ສະນັ້ນຊາຕານເປັນຜູ້ກໍ່ໃຫ້ເກີດມົນທິນຂອງຄວາມບາບແລະເປັນເຫດໃຫ້ລູກຂອງພຣະເຈົ້າຕ້ອງຕົກໃນບາບ ຈະຖືກກັກຂັງຢູ່ໃນໂລກນີ້ເປັນເວລາພັນປີ.

**ຄໍາຕອບ:** ຫລັກຄໍາສອນນີ້ປະຕິເສດການຕາຍແລະການຫລັ່ງໂລຫິດຂອງ ພຣະຄຣິດເທິງໄມ້ກາງແຂນໃນໂລກນີ້ຂອງ *Calvary.* ຫລັກຄໍາສອນນີ້ໄດ້ ແຍກ ເຊເວັນເດ ແອັດແວັນຕິສທ໌ຈາກການປະກາດຂ່າວປະເສີດ.

3. ການນະມັສະການໃນວັນເສົາໄດ້ກາຍເປັນຮູບການທີ່ສໍາຄັນ ຫລັງຈາກທີ່ໄດ້ເຮັດມາຊຶ່ງໄດ້ໃຫ້ຊື່ວ່າ The *Seventhday Sabbath*, ແລະເປັນຮູບແບບນີ້ຕະຫລອດໄປ, ມັນຂະຫຍາຍຂື້ນໄປຕະຫລອດໂດຍມີການເຕືອນວ່າ,ຄົນເຫລົ່ານີ້ຈະໄດ້ຮັບສັນຍາລັກຢູ່ເທິງໜ້າຜາກຂອງເຂົາສໍາຫລັບການນະມັສະການມະນຸດທີ່ດຸຮ້າຍ ແລະ ສັນຍາລັກຂອງລາວຈະເປັນຜູ້ທີ່ຕິດຕາມລາຊະສະໃໝຂອງສັງຄະລາດ ໃນການນະມັສະການໃນວັນອາທິດ.ລາວໄດ້ເວົ້າວ່າ ວັນຊາບາໂຕໄດ້ຖືກປ່ຽນໂດຍໂບດໂລມັນ ຄາເທີລິກ. ພວກເຂົາໄດ້ໂຕ້ຖຽງ ກັນ ວ່າຫລັກການພື້ນຖານຂອງພະບັນຍັດນັ້ນບໍ່ສາມາດປ່ຽນແປງໄດ້.

**ຄໍາຕອບ:** ຄຣິສຕະຈັກໄດ້ມີການນະມັສະການໃນມື້ທໍາອິດຂອງອາທິດຫລັງ ຈາກການຄືນພຣະຊົນ. ໂຢຮັນ 20:1, ກິດຈະການ 20:7; 1ໂກລິນໂທ 16:2; ພະນິມິດ 1:10. ເຮັບເຣີ4: ໄດ້ກ່າວໄວ້ວ່າພຣະວິນຍານຂອງວັນຊາບາໂຕ ແມ່ນ ຍັງເຫລືອໄດ້ເຂົ້າມາໃນເມື່ອຄົນນັ້ນໄດ້ເກີດໃໝ່ ແລະ ໄດ້ສິ້ນສຸດຈາກການ ງານຂອງເຂົາຕໍ່ການຫາຄວາມລອດ.

4. ຄວາມເຊື່ອໃນ "*ວິນຍານທີ່ຫລັບໄຫຍ*"ແມ່ນເປັນອີກຮູບການໜຶ່ງຂອງ ຫລັກຄໍາສອນຂອງ ເຊເວັນເດແອັດແວນຕິສທ໌ ທີ່ທ້າທາຍໂດຍການເຄື່ອນໄຫວຂອງ ກຸ່ມນີ້. ພວກເຂົາສອນວ່າຈິດໃນກໍ່ຄືກັບຮ່າງກາຍ ແມ່ນຢູ່ໃນພາວະບໍ່ຮູ້ສຶກຕົວ:"ຄວາມຕາຍແມ່ນຄວາມຈິງຂອງການນອນ, ຊຶ່ງເປັນການນອນຫລັບເລິກ,ທີ່ບໍ່ຮູ້ສຶກຕົວ,ບໍ່ມີການສູນເສຍຈົນກວ່າຈະຕື່ນມາດັ່ງການຟື້ນຄືນ ," *Carlyle Haynes ໄດ້ຂຽນໄວ້.* ລາວໄດ້ໂຕ້ແຍ້ງວ່າພາສາຂອງພຣະຄໍາພີ ເຮັດໃຫ້ຊັດເຈນວ່າມະນຸດນັ້ນໄດ້ນອນຫລັບ,ບໍ່ແມ່ນການຈາກໄປ.ບໍ່ມີການແຈ້ງວ່າມະນຸດພຽງແຕ່ນອນຫລັບຕໍ່ກັບຮ່າງກາຍຂອງລາວ, ແລະ ລາວຮູ້ສຶກຕົວຕໍ່ກັບຈິດໃຈຂອງລາວ."

**ຄໍາຕອບ: ໂຢຮັນ 11:11-14; 2ໂກລິນໂທ5:68; ຟີລິບປອຍ l:21-14**

5. ການລົງໂທດຊົ່ວນິລັນ: ພວກປະຕິເສດຄໍາສອນຂອງພຣະຄໍາພີຕໍ່ກັບ ຄວາມຮູ້ ແລະ ການລົງໂທດເປັນນິລັນຂອງຜູ້ທີ່ບໍ່ເຊື່ອຢູ່ໃນນະລົກ. ໃນຄໍາຖາມຂອງ ຫລັກຄໍາສອນ, ທໍາອິດທີ່ໄດ້ພິມອອກໃນ 1957, ພວກເຂົາໄດ້ໃຫ້ ເຫດຜົນ 5 ຢ່າງກ່ຽວກັບຈຸດຢືນຂອງພວກເຂົາດັ່ງນີ້:

a) ເພາະວ່າຊີວິດນິລັນເປັນຂອງຂັວນຈາກພຣະເຈົ້າ (ໂລມ 6:23).ຄົນຊົ່ວຈະບໍ່ໄດ້ຮັບສິ່ງນີ້. ພວກເຂົາ "ຈະບໍ່ໄດ້ພົບຊີວິດ"(ໂຢຮັນ 3:336) "ຜູ້ຂ້າຄົນບໍ່ມີຊີວິດຕັ້ງຢູ່ໃນຕົນຈັກເທື່ອ."(1 ໂຢຮັນ 3:15).

**ຄໍາຕອບ**: ນີ້ແມ່ນຄວາມຈິງ.ພວກເຂົາບໍ່ໄດ້ຮັບຊີວິດອັນຕະຫລອດໄປ ເປັນນິ,ພວກຈະໄດ້ຮັບຄວາມຕາຍຊົ່ວນິລັນ, ແລະ ການແຍກຈາກພຣະເຈົ້າຊົ່ວນິລັນ. 2ເທຊະໂລນິກ 1:8-9

b) ເພາະວ່າການທໍລະມານຊົ່ວນິລັນອາດມີຕະຫລອດໄປ ແລະ ຄວາມບາບທີ່ບໍ່ຮູ້ຈັກຕາຍ,ການທໍລະມານແລະ ຄວາມຈິບຫາຍ ແລະ ການໂຕ້ຖຽງກັນ,ພວກເຮົາເຊື່ອ ການເປີດເຜີຍຂອງພຣະເຈົ້າ ຊຶ່ງໄດ້ສ້າງຈິນຕະພາບເວລາເມື່ອຈະບໍ່ມີອີກຕໍ່ໄປ.(ພະນິມິດ 21:4)

GCI

ຄຳຕອບ: ພຣະພີທີ່ເຂົາອ້າງເຖິງແມ່ນໄດ້ເວົ້າ ເຖິງ “ແຜ່ນດິນສະຫວັນໃໝ່ ແລະ ໂລກໃໝ່.”

ຄວາມຈິງແລ້ວ,ຜູ້ທີ່ເຮັດບາບຈະບໍ່ມີສ່ວນ. ຂໍ້ທີ່ 8 ໄດ້ບອກວ່າ “ທີ່ຂອງເຂົານັ້ນຢູ່ໃນນະລົກບຶງໄຟປືນກັບມາດ ຊຶ່ງແມ່ນຄວາມຕາຍຄັ້ງທີ່ສອງ,”ໄດ້ແຍກຈາກພຣະເຈົ້າແລະຊີວິດອັນນິລັນຕະຫລອດໄປ. (ພະນິມິດ 20:10).

c) ເພາະວ່າມັນເບິ່ງຄືວ່າໄດ້ມີໂລກລະບາດຢູ່ໃນຈັກກະວານຂອງພຣະເຈົ້າ ອັນນິລັນ, ແລະ ອາດເບິ່ງວ່າມັນເປັນໄປບໍ່ໄດ້ທີ່ພຣະເຈົ້າຈະລຶບລ້າງມັນ.

**ຄຳຕອບ**: ເປັນເລື່ອງທີ່ບໍ່ມີເຫດຜົນ. "*ບໍ່ມີສິ່ງໃດທີ່ເປັນໄປບໍ່ໄດ້ໂດຍພຣະເຈົ້າ.*" ພວກເຂົາໄດ້ໃຫ້ເຫດຜົນຂອງເຂົາ ຢູ່ເໜືອພຣະເຈົ້າ ແລະ ຢູ່ໃນຈະທີ່ພຣະອົງໄດ້ບອກໄວ້ໃນແຜນການຂອງພຣະອົງ.

d) ເພາະວ່າໃນຄວາມຄິດຂອງພວກເຮົາມັນອາດຖືກຊອນໃຫ້ສົນໃຈນຳສິ່ງອື່ນຈາກເຫດຜົນຂອງຄວາມຮັກຢູ່ໃນພຣະລັກສະນະຂອງພຣະເຈົ້າ, ແລະ ຄວາມຄິດຫລັກໆຂອງຄວາມໂກດຮ້າຍ ຊຶ່ງບໍ່ເຄີຍຢຸດ.

**ຄຳຕອບ**: ຄວາມກ້ວາງ ແລະ ຄວາມຍາວ ແລະ ຄວາມສູງ ແລະ ຄວາມເລິກ ຂອງ ພຣະເຈົ້າໄດ້ສະແດງ ແລະ ມີໄວ້ສຳຫລັບທຸກຄົນ, “ຜູ້ທີ່ເຊື່ອ”(ໂຢຮັນ 3:16). ແຕ່ສຳຫລັບຜູ້ທີ່ປະຕິເສດຈະ “ບໍ່ມີຊີວິດ”ແຕ່ຈະໄດ້ຮັບຄວາມໂກດຮ້າຍຂອງພຣະເຈົ້າ ຕະຫລອດໄປ. ນີ້ແມ່ນຄວາມຕາຍອັນນິລັນແລະ ແຍກອອກຈາກພຣະເຈົ້າ.

e) ເພາະວ່າພຣະຄຳພີສອນວ່າ ການໄຖ່ບາບຂອງພຣະເຢຊູຄຣິດແມ່ນ ການເຮັດເອົາຄວາມບາບນັ້ນອອກໄປ (ເຮັບເຣີ 9:26),ທຳອິດຈາກບຸກຄົນ ແລະ ສຸດທ້າຍຈາກຈັກກະວານ.ຄວາມສຳເລັດຈາກການເສຍສະຫລະຂອງ ພຣະເຢຊູຄຣິດ, ແຜນການໄຖ່ຈະບໍ່ໄດ້ເຫັນພຽງແຕ່ຢູ່ໃນການໄຖ່ມະນຸດເທົ່ານັ້ນ ແຕ່ເປັນການຟື້ນຟູແຜ່ນດິນສວັນແລະ ໂລກ. (ເອເຟໂຊ 1:14)

**ຄຳຕອບ**: ແມ່ນແລ້ວ, ສິ່ງທີ່ເວົ້າມານັ້ນແມ່ນຄວາມຈິງ. ແຕ່ວ່າ,ຍັງບໍ່ກວມເອົາຄວາມຈິງທັງໝົດທີ່ວ່າ, “ນະລົກບຶງໄຟ” ສຳຫລັບຄົນບາບທີ່ບໍ່ເຊື່ອ, ພະຍາມານ, ຄົນຊົ່ວຮ້າຍ ແລະ ຄົນທີ່ປອມຕົວເປັນຜູ້ປະກາດພຣະຄຳ, ແມ່ນຈະຕ້ອງທົນທຸກທໍລະມານ ທັງກາງເວັນແລະກາງຄືນ ຕລອດໄປເປັນນິດ. ພະນິມິດ 20:10.

<u>**ລາຍຊື່ຂໍ້ມູນອ້າງອີງ**</u>:

1. Ruth A Tucker. *Another Gospel* (Grand Rapids Michigan, Academies Books, Zondervan Publishing House, 1989).

2. Alan W. Gomes. *Truth And Error, Comparative Charts on Cults and Christianity* (Grand Rapids Michigan, Zondervan Publishing House, 1998).